ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະມະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

05-11 ພຶດສະພາ 2023

ປີທີ 12

ສະບັບທີ 921

ລາຍສັບປະດາ

## ປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງຄະນະຜູ້ແທນຂັ້ນສູງພັກກອມມູນິດກູບາ



(ສພຊ) ວັນທີ 30 ເມສາຜ່ານມາ, ຄະນະຜູ້ແທນຂັ້ນສູງພັກກອມມູນິດກູບາ ນຳໂດຍສະຫາຍ ໂຣເບີດໂຕ ໂມຣາເລັດສ ໂອເຣດາ ກຳມະການກົມການເມືອງສູນກາງພັກ, ເລຂາທິການຄະນະຈັດຕັ້ງສູນກາງພັກກອມມູນິດກູບາ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂໍ່ານັບສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໃນໂອກາດທີ່ເດີນທາງມາຢ້ຽມຢາມ ສປປລາວ ຢ່າງເປັນທາງການ ໃນລະຫວ່າງວັນທີ 28-30 ເມສາ 2023.

ໃນການຕ້ອນຮັບ, ສະຫາຍ ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ການຢ້ຽມຢາມ ສປປລາວ ຢ່າງເປັນທາງການຂອງສະຫາຍ ໂຣເບີດໂຕ ໂມຣາເລດສ ໂອເຣດາ ພ້ອມຄະນະໃນຄັ້ງນີ້ ເຊິ່ງເປັນການຢ້ຽມຢາມທີ່ມີຄວາມໝາຍຄວາມສຳຄັນ ແລະ ເປັນນິມິດໝາຍທີ່ດີໃນການສືບຕໍ່ຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບການພົວພັນຮ່ວມມືຖານອ້າຍນ້ອງລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງປະເທດໃຫ້ສູງຂຶ້ນ ທັງໄດ້ແຈ້ງສະພາບການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ, ຕີລາຄາສູງຕໍ່ການພົວພັນຮ່ວມມື ລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດອຳນາດປະຊາຊົນກູບາ ໃນໄລຍະຜ່ານມາ ເຊິ່ງໄດ້ມີການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນ ລະດັບປະທານສະພາ ແລະ ຄະນະມິດຕະພາບລັດຖະສະພາລາວ-ກູບາ; ອັນທີ່ພົ້ນເດັ່ນ ສະຫາຍປະທານສະພາແຫ່ງຊາດ ຊຸດທີ VIII ໄດ້ຢ້ຽມຢາມ ສ.ກູບາ ຢ່າງເປັນທາງການ ໃນເດືອນກຸມພາ 2019. ໃນໂອກາດການຢ້ຽມຢາມດັ່ງກ່າວ ສອງສະພາແຫ່ງຊາດ ລາວ-ກູບາ ໄດ້ລົງນາມບົດບັນທຶກຊ່ວຍຈຳ (MOU) ວ່າດ້ວຍການຮ່ວມມືລະຫວ່າງ ສອງອົງການນິຕິບັນ

ອ່ານຕໍ່ໜ້າ 2

## ກຸ່ມບໍລິສັດ ມັງກອນການລົງທຶນຫວຽດນາມ ເຂົ້າຢ້ຽມຂໍ່ານັບປະທານສະພາແຫ່ງຊາດ



ອ່ານໜ້າ 4

## ຕິດຕາມກວດກາການປະເມີນຜົນ ການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ



(ສພຊ) ເພື່ອເປັນການສະຫຼຸບຕີລາຄາຄືນ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ໃນວັນທີ 2 ພຶດສະພາ 2023 ຢູ່ຫ້ອງປະຊຸມອົງການໄອຍະການປະຊາຊົນແຂວງອຸດົມໄຊ ໄດ້ຈັດກອງປະຊຸມການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ຈຳນວນ 4 ສະບັບ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ໃຫ້ກຽດເຂົ້າຮ່ວມກອງປະຊຸມຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ທັງເປັນປະທານກຳມາທິການ

ອ່ານຕໍ່ໜ້າ 3

## ເພີ່ມທະວີການຄຸ້ມຄອງການລົງທຶນຂອງລັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ



(ສພຊ) ໃນລະຫວ່າງວັນທີ 2-3 ພຶດສະພາ 2023 ຢູ່ສະພາແຫ່ງຊາດ ນະຄອນຫຼວງວຽງຈັນ ໄດ້ມີກອງປະຊຸມສຳມະນາວິທະຍາຄສາດ ຂັ້ນວິຊາການ ໃນຫົວຂໍ້: ເພີ່ມທະວີການຄຸ້ມຄອງການລົງທຶນຂອງລັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ໂດຍການເປັນປະທານຮ່ວມຂອງທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ ການເງິນ ແລະ ການກວດສອບ ແລະ ທ່ານ ຄຳເຈນ ວົງໂພສີ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ; ມີບັນດາທ່ານປະທານ-ຮອງປະທານກຳມາທິ

ອ່ານຕໍ່ໜ້າ 4

## ນັກສຶກສາທິດສະດີການເມືອງຂັ້ນຕົ້ນ ຊຸດທີ I ຂອງ ສພຊ ທັດສະນະສຶກສາຢູ່ແຂວງບໍລິຄຳໄຊ



ອ່ານຕໍ່ໜ້າ 2



### ຮອງປະທານ...

ອ່ານຕໍ່ໜ້າ 5



### ກອງປະຊຸມຄະນະປະຈຳ...

ອ່ານຕໍ່ໜ້າ 6



### ຫາລືກ່ຽວກັບການກະກຽມ...

ອ່ານຕໍ່ໜ້າ 7

## ປະທານ...

(ຕໍ່ຈາກໜ້າ 1)

ຍັດນຳກັນ ເປັນນິຕິກຳທີ່ເປັນບ່ອນອີງໃນການຈັດຕັ້ງຜັນຂະຫຍາຍການພົວພັນຮ່ວມມືຂອງສອງອົງການນິຕິບັນຍັດຂອງ ສອງປະເທດ. ໃນເດືອນເມສາ ປີ 2022 ຜ່ານມາ, ສະຫາຍປະທານສະພາແຫ່ງຊາດລາວ ໄດ້ພົບປະແບບທາງໄກນຳສະຫາຍ ເອັສເຕບານ ລາໂຊ ເຮີນານເດສ ປະທານສະພາແຫ່ງຊາດອຳນາດປະຊາຊົນກູບາ ແລະ ໄດ້ຮ່ວມກັນຕີລາຄາການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດອຳນາດປະຊາຊົນແຫ່ງ ສ.ກູບາ ໃນໄລຍະຜ່ານມາ ແລະ ປຶກສາຫາລື ກ່ຽວກັບທິດທາງແຜນການໃນຕໍ່ໜ້າ; ແລກປ່ຽນຄຳຄິດເຫັນກ່ຽວກັບສະພາບການແຜ່ລະບາດຂອງພະຍາດໂຄວິດ-19. ນອກຈາກນີ້, ສອງອົງການນິຕິບັນຍັດຍັງມີການແລກປ່ຽນບົດຮຽນ ແລະ ຂໍ້ມູນ-ຂ່າວສານ, ສິ່ງສານຊົມເຊີຍ, ສານອວຍພອນ ເຊິ່ງກັນແລະກັນ ໃນໂອກາດວັນສຳຄັນຂອງຊາດ ແລະ



ສະໜັບສະໜູນກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ. ໄດ້ແຈ້ງໃຫ້ຄະນະຜູ້ແທນ ສ.ກູບາ ຮັບຊາບຕື່ມກ່ຽວກັບການແຕ່ງຕັ້ງຄະນະມິດຕະພາບລັດຖະສະພາ ລາວ-ກູບາ, ສະພາແຫ່ງຊາດ ເຊິ່ງເປັນກົນໄກໜຶ່ງໃນການປະສານງານ ລະຫວ່າງ ສອງອົງການນິຕິບັນຍັດ. ພ້ອມກັນນີ້, ສະຫາຍໂຮເບີດໂຕ ໂມຣາເລັດສ໌ ໂອເຣດາ ກໍໄດ້ສະແດງຄວາມຂອບໃຈເປັນຢ່າງສູງ ຕໍ່ການຕ້ອນຮັບຂອງສະຫາຍ ໄຊສົມພອນ ພົມວິຫານ, ແຈ້ງຜົນການເລືອກຕັ້ງສະມາຊິກສະພາແຫ່ງຊາດອຳນາດປະຊາຊົນ, ການແຕ່ງຕັ້ງປະທານປະເທດ, ຮອງປະທານປະເທດ, ບຸກຄະລາກອນຂອງສະພາແຫ່ງຊາດ, ຄະນະລັດຖະບານຂອງ ສ.ກູບາ ແລະ ລາຍງານໃຫ້ຊາບ ກ່ຽວກັບຜົນການເຂົ້າຢ້ຽມຂຳນັບສະຫາຍເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປລາວ, ຜົນຂອງການພົບປະສອງຝ່າຍກັບສະຫາຍປະທານກວດກາແຫ່ງລັດ, ການຈັດກອງປະຊຸມສຳມະນາດ້ານທິດສະດີ, ຜົນການເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປລາວ ຖືວ່າໄດ້ຮັບຜົນສຳເລັດຢ່າງຈົບງາມ ແລະ ບັນລຸຕາມຈຸດປະສົງລະດັບຄາດໝາຍທຸກປະການ.

ໃນການປຶກສາຫາລືຄັ້ງນີ້, ສອງຝ່າຍ ໄດ້ແລກປ່ຽນຄຳຄິດເຫັນຕໍ່ການຊຸກຍູ້ ແລະ ສົ່ງເສີມໃຫ້ສອງປະເທດ ສືບຕໍ່ເພີ່ມທະວີການຮ່ວມມືທາງດ້ານເສດຖະກິດ, ການຄ້າ, ກະສິກຳ, ສຶກສາ, ສາທາລະນະສຸກ ແລະ ການທ່ອງທ່ຽວທີ່ສອງປະເທດມີທ່າແຮງນຳກັນ ໃຫ້ເປັນຮູບປະທຳຂຶ້ນກວ່າເກົ່າ ແນໃສ່ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງສອງປະເທດ ໃຫ້ມີການຂະຫຍາຍຕົວຂຶ້ນເປັນກ້າວໆ.

ໃນຕອນທ້າຍ, ສະຫາຍປະທານສະພາແຫ່ງຊາດລາວ ໄດ້ຢ້ຳຄືນການເຊື້ອເຊີນສະຫາຍ ເອັສເຕບານ ລາໂຊ ເດີນທາງມາຢ້ຽມຢາມ ສປປລາວ ໃນເວລາທີ່ມີຄວາມສະດວກ ແລະ ໄດ້ຮັບເອົາການເຊື້ອເຊີນຂອງສະຫາຍປະທານສະພາແຫ່ງຊາດອຳນາດປະຊາຊົນກູບາ ທີ່ໄດ້ເຊີນສະຫາຍ ໄຊສົມພອນ ພົມວິຫານ ໄປຢ້ຽມຢາມ ສ.ກູບາ ໂດຍຈະພິຈາລະນາວັນເວລາທີ່ເໝາະສົມ ແລ້ວແຈ້ງຜ່ານທາງການທູດ ຕາມພາຍຫຼັງ.

## ນັກສຶກສາ...

(ຕໍ່ຈາກໜ້າ 1)

(ສພຊ) ວັນທີ 3 ພຶດສະພາ 2023, ທ່ານ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ເລຂາທິການສະພາແຫ່ງຊາດ ພ້ອມດ້ວຍຄະນະຄູ-ອາຈານ ຈາກສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແລະ ນັກຮຽນທິດສະດີການເມືອງຂັ້ນຕົ້ນ ຊຸດທີ I ຂອງສະພາແຫ່ງຊາດ (ສພຊ) ໄດ້ເດີນທາງໄປທັດສະນະສຶກສາຢູ່ກຸ່ມຜະລິດຄືບວົງຈອນ ເລກ I ເມືອງທ່າພະບາດ ແຂວງບໍລິຄຳໄຊ ໂດຍການຕ້ອນຮັບຢ່າງອົບອຸ່ນຈາກທ່ານ ນາງ ຟອງສະໝຸດ ພົງວິຈິດ ເລຂາທິການສະພາປະຊາຊົນແຂວງບໍລິຄຳໄຊ, ທ່ານ ສະຫວັນເພັດ ຈັນທະວົງສາ ປະທານກວດກາພັກ-ລັດ ເມືອງ, ສະມາຊິກສະພາປະຊາຊົນແຂວງບໍລິຄຳໄຊ ປະຈຳເຂດເລືອກຕັ້ງເມືອງທ່າພະບາດ ແລະ ທ່ານ ພັທ. ອານຸສິດ ນິນວັນທອງ ເລຂາຄະນະພັກຮາກຖານ, ຫົວໜ້າກຸ່ມຜະລິດຄືບວົງຈອນ ເລກທີ 1; ມີຄະນະພັກຄະນະບັນຊາ ພ້ອມດ້ວຍຫົວໜ້າ-ຮອງຫ້ອງການພາຍໃນເມືອງເຂົ້າຮ່ວມຕ້ອນຮັບ.

ໃນການທັດສະນະສຶກສາຄັ້ງນີ້, ໄດ້ຮັບຟັງການລາຍງານກ່ຽວກັບການເຄື່ອນໄຫວວຽກງານຂອງກຸ່ມຜະລິດຄືບວົງຈອນ ເລກ I ຈາກທ່ານ ພັທ. ອານຸສິດ ນິນວັນທອງ; ຫຼັງຈາກນັ້ນ, ກໍໄດ້ມີການແລກປ່ຽນຖອດຖອນບົດຮຽນເຊິ່ງກັນ ແລະ ກັນ ຢ່າງກົງໄປກົງມາດ້ວຍບັນຍາກາດສ້າງສັນ; ພ້ອມດຽວກັນນັ້ນ, ຍັງໄດ້ນຳເອົາເຄື່ອງຫຼິ້ນກິລາ ແລະ ຢາສາມັນປະຈຳບ້ານ ຈຳນວນໜຶ່ງມອບໃຫ້ແກ່ກຸ່ມຜະລິດຄືບວົງຈອນ ເລກ I; ຈາກນັ້ນ, ຂະບວນທັດສະນະດັ່ງກ່າວຍັງໄດ້ໄປຢ້ຽມຊົມ ແລະ ສັກກະລະບູຊາ ຢູ່ວັດພະບາດໂພນສັນ ແລະ ວັດນາຄານິມິດໂພນສັນ.

ໃນວັນທີ 4 ພຶດສະພາ, ຄະນະຍັງໄດ້ເດີນທາງໄປວາງກະຕ່າດອກໄມ້ ຢູ່ອານຸສອນສະຖານ ທ່ານ ໄກສອນ ພົມວິຫານ ແລະ ອານຸສາວະລີ ທ່ານ ສີສົມພອນ ລໍວັນໄຊ ແຂວງບໍລິຄຳໄຊ ຕື່ມອີກ.

(ຖວທ ເມືອງ ທ່າພະບາດ)

## ເລື່ອງເດັ່ນ ຂ່າວເດັດ

# ຄັດໂດຍ: ຫອມສະໝິດ

*❒ ພາກພື້ນອາຊີ ແລະ ປາຊີຟິກ ຢູ່ແຖວໜ້າຂອງການຕໍ່ສູ້ຕ້ານກັບສະພາບການປ່ຽນແປງດິນຟ້າອາກາດພາກພື້ນກວມເອົາ 70% ຂອງປະຊາກອນໂລກ ມີຄວາມສ່ຽງຈາກລະດັບນ້ຳທະເລທີ່ເພີ່ມຂຶ້ນ ຂະນະດຽວກັນ ພາກພື້ນໄດ້ປະກອບສ່ວນເກືອບເຄິ່ງໜຶ່ງ ຂອງການປ່ອຍທາດອາຍພິດເຮືອນແກ້ວຂອງທົ່ວໂລກ ໃນປີ 2019 ການບັນລຸເປົ້າໝາຍທາງເສດຖະກິດ ແລະ ການພັດທະນາຂອງອາຊີ ແລະ ປາຊີຟິກ ໃນຂະນະທີ່ຫຼີກລ່ຽງຄວາມສ່ຽງຈາກໄພພິບັດດ້ານສະພາບດິນຟ້າອາກາດ ຈະບໍ່ສາມາດເຮັດໄດ້ ຫາກບໍ່ປ່ຽນແປງຮູບແບບການເຕີບໂຕຂອງພາກພື້ນ; ການປ່ຽນແປງນີ້ ຈຳເປັນຕ້ອງປ່ຽນແທນຖ່ານຫີນ ແລະ ນ້ຳມັນເຊື້ອໄຟຟອດຊິວອື່ນໆໂດຍໄວດ້ວຍແຫຼ່ງພະລັງງານທົດແທນເພີ່ມປະສິດທິຜົນພະລັງງານ ແລະ ອະນຸຮັກ "ແຫຼ່ງເກັບກັກຄາບອນ" ເປັນຕົ້ນ ປ່າໄມ້ ຜົນຕາມມາ ກໍຄືແນວທາງການຫັນໃຫ້ເປັນສູນໃນທົ່ວໂລກ ສາມາດຊ່ວຍຮັກສາຊີວິດຄົນໄດ້ ປະມານ 350.000 ຄົນຕໍ່ປີ ພາຍໃນປີ 2030 ເນື່ອງຈາກມົນລະພິດທາງອາກາດຫຼຸດລົງ ນອກນີ້, ຍັງສາມາດສ້າງວຽກເຮັດງານທຳເພີ່ມອີກ 1,5 ລ້ານຕຳແໜ່ງ ໃນຂະແໜງພະລັງງານພາຍໃນປີ 2050.*

***ໜສພ. ວຽງຈັນໃໝ່ 02/05/2023***

*❒ ຈາກຜົນການສຳຫລວດກຳລັງແຮງງານລາວ ໃນປີ 2022 ດ້ານພົນລະເມືອງລາວທັງໝົດມີປະມານ 7,4 ລ້ານກວ່າຄົນ. ໃນນັ້ນ ມີອາຍຸໃນເກນອອກແຮງງານ 5,3 ລ້ານຄົນ (ອາຍຸ 15 ປີຂຶ້ນໄປ), ເປັນກຳລັງແຮງງານ 2,7 ລ້ານຄົນ, ມີວຽກເຮັດ 2,4 ລ້ານຄົນ (35% ມີເງິນເດືອນ ແລະ ເປັນນາຍຈ້າງ 65% ເຮັດວຽກອິດສະລະ, ເຮັດວຽກໃຫ້ຄອບຄົວບໍ່ມີຄ່າແຮງງານ), ວ່າງງານ 2,4% ເທົ່າກັບ 61 ພັນກວ່າຄົນ; ສຳລັບກຳລັງແຮງງານລາວດ້ານຄຸນນະພາບ ຖ້າເບິ່ງດ້ານການສຶກສາ ບໍ່ມີການສຶກສາ 12%, ບໍ່ຈົບປະຖົມ ຕ່ຳກວ່າປະຖົມ 31,5%, ຈົບປະຖົມ 18% ແລະ ຈົບມັດທະຍົມປາຍ7,5%,ວິຊາສະເພາະຊັ້ນຕົ້ນ1%,ຊັ້ນກາງ 3%, ຊັ້ນສູງ 5,9% ແລະ ມະຫາວິທະຍາໄລ 6,9% ຍັງບໍ່ມີການສຳຫລວດປະສິດທິພາບຂອງແຮງງານລາວຢ່າງເປັນທາງການ ແຕ່ມີບາງຂະແໜງເສດຖະກິດໄດ້ມີການສົມທຽບໃນລະດັບພາກພື້ນອາຊຽນເຫັນວ່າແຮງງານລາວມີຕ່ຳກວ່າຫລາຍປະເທດໃນອາຊຽນ.*

***ໜສພ. ປະເທດລາວ 03/05/2023***

*❒ ກະຊວງສາທາລະນະສຸກ ໄດ້ລາຍງານໃຫ້ຮູ້ວ່າ: ປັດຈຸບັນມີພະຍາດຫຼາຍຢ່າງເກີດຂຶ້ນ ເດັກນ້ອຍທຸກຄົນຕ້ອງໄດ້ຮັບການປົກປ້ອງ ໃນນັ້ນ, ການສັກຢາຫຼາຍເຂັມພ້ອມກັນແມ່ນມີຜົນດີຫຼາຍຢ່າງຄື: ເດັກຈະໄດ້ຮັບການປົກປ້ອງຈາກພະຍາດຮ້າຍແຮງຕ່າງໆຕັ້ງແຕ່ຕອນຍັງນ້ອຍ ເພື່ອສ້າງພູມຄຸ້ມກັນໃຫ້ເດັກ ຖ້າທຽບໃສ່ເດັກທີ່ໄດ້ສັກວັກຊີນຕອນອາຍຸຫຼາຍແລ້ວ, ສິ່ງສຳຄັນ ຖ້າເດັກນ້ອຍໄດ້ຮັບວັກຊີນຫຼາຍຊະນິດພ້ອມກັນ, ຜູ້ປົກຄອງຈະບໍ່ເສຍເວລານຳພາລູກຫຼານໄປສັກວັກຊີນຫຼາຍຄັ້ງ ແລະ ບໍ່ໄດ້ເສຍເງິນຄ່າເດີນທາງຫຼາຍເທື່ອ, ມີເວລາເຮັດວຽກຄອບຄົວ ແລະ ອື່ນໆ, ວັກຊີນທຸກຊະນິດທີ່ເດັກນ້ອຍໄດ້ຮັບແມ່ນມີຄວາມປອດໄພສູງ ໄດ້ມາດຕະຖານສາກົນ ແລະ ບໍ່ໄດ້ເສຍເງິນ, ສັກບໍ່ເສຍຄ່າ, ສຳລັບອາການທີ່ຈະເກີດຂຶ້ນເມື່ອເດັກໄດ້ຮັບວັກຊີນ ຄື: ເຈັບປວດໄຄ່ບວມເລັກໜ້ອຍຢູ່ຈຸດສັກ ແລະ ຄີງອຸ່ນ ແມ່ນອາການທຳມະດາ ເຊິ່ງຈະເຊົາເອງພາຍໃນ 1 ຫາ 2 ມື້ ສ່ວນຫຼາຍແມ່ນບໍ່ຕ້ອງປິ່ນປົວຫຍັງໃຫ້ເອົາຜ້າຈຸ່ມນ້ຳເຊັດຕາມຕົນຕົວ ຫຼື ໃຫ້ຢາປາຣາເຊຕາໂມນ.*

***ໜສພ. ປະຊາຊົນ 03/05/2023***

# ປຶກສາຫາລືກ່ຽວກັບການດຶງດູດການລົງທຶນຂອງນັກລົງທຶນນະຄອນເຊັນໄດ



(ສພຊ) ວັນທີ 3 ພຶດສະພາ 2023 ທີ່ສະພາແຫ່ງຊາດ ໄດ້ມີພິທີພົບປະສອງຝ່າຍ ສະຫວ່າງ ກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດລາວ ແລະ ສະມາຊິກສະພານະຄອນ ເຊັນໄດ (SENDAI) ປະເທດຍີ່ປຸ່ນ ເຊິ່ງຝ່າຍລາວ ນຳໂດຍທ່ານ ນາງ ມະນີວັນ ເຍຍປາວເຮີ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ແລະ ຝ່າຍຍີ່ປຸ່ນ ນຳໂດຍທ່ານ ອາບິໂກະ ມາຊາຮິໂຣ (ABIKO MASAHIRO) ທັງນີ້, ກໍເພື່ອປຶກສາຫາລືກ່ຽວກັບການດຶງດູດການລົງທຶນຂອງນັກລົງທຶນນະຄອນເຊັນໄດ; ການເອົາແຮງງານຂອງ ສປປລາວ ໄປຝຶກທັກສະແຮງງານຢູ່ປະເທດຍີ່ປຸ່ນ; ການພັດທະນາຊັບພະຍາກອນມະນຸດດ້ວຍການສົ່ງເສີມການສຶກສາ ເພື່ອເປັນພື້ນຖານໃນການຜັນຂະຫຍາຍ ແລະ ກ້າວໄປສູ່ການເຊັນບົດບັນທຶກການຮ່ວມມືຂອງສະພານະຄອນ ເຊັນໄດ ແລະ ສະພາແຫ່ງຊາດ ແຫ່ງ ສປປລາວ.

ໃນພິທີພົບປະດັ່ງກ່າວ, ທ່ານ ນາງ ມະນີວັນ ເຍຍປາວເຮີ ໄດ້ຍົກໃຫ້ເຫັນເຖິງການຈັດຕັ້ງປະຕິບັດພາລະບົດບາດຂອງສະພາແຫ່ງຊາດລາວ ແລະ ການປະຕິບັດພາລະບົດບາດຂອງກຳມາທິການວັດທະນະທຳ-ສັງຄົມ ລວມໄປເຖິງການພົວພັນຮ່ວມມືລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດ; ການຢ້ຽມຢາມ ພົບປະ ແລະ ແລກປ່ຽນບົດຮຽນຂອງຄະນະມິດຕະພາບລັດຖະສະພາລາວ-ຍີ່ປຸ່ນ ແລະ ບັນຫາອື່ນໆ; ພ້ອມນັ້ນ, ຍັງໄດ້ສະເໜີໃຫ້ມີການແລກປ່ຽນການຢ້ຽມຢາມ, ມີການໄປມາຫາສູ່ກັນໃຫ້ເປັນປົກກະຕິ ແລະ ຊຸກຍູ້ໃຫ້ກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດລາວ ແລະ ກຳມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດລາວ ແລະ ສະພານະຄອນ ເຊັນໄດ ປະເທດຍີ່ປຸ່ນ ມີການພົບປະ, ແລກປ່ຽນບົດຮຽນເຊິ່ງກັນແລະກັນ ໃນການປະຕິບັດພາລະບົດບາດຂອງລັດຖະສະພາ ແລະ ຍົກລະດັບການຮ່ວມມືໃຫ້ມີການເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ຄະນະມິດຕະພາບລັດຖະສະພາລາວ-ຍີ່ປຸ່ນ, ຍີ່ປຸ່ນ-ລາວ ແລະ ສອງອົງການນິຕິບັນຍັດໃນອະນາຄົດ; ສະເໜີໃຫ້ມີການແລກປ່ຽນຂໍ້ມູນໃນການຈັດຕັ້ງປະຕິບັດພາລະບົດບາດນິຕິບັນຍັດ ເປັນຕົ້ນ ການສ້າງ ແລະ ປັບປຸງກົດໝາຍ, ການຕິດຕາມກວດກາການຄຸ້ມຄອງ ແລະ ການປົກປ້ອງສິດຜົນປະໂຫຍດຂອງແຮງງານ, ການສົ່ງເສີມການທ່ອງທ່ຽວລະຫວ່າງສອງປະເທດ, ການພັດທະນາຊັບພະຍາກອນມະນຸດ ແລະ ອື່ນໆ; ສະເໜີສືບຕໍ່ສະໜັບສະໜູນຕໍ່ການຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການ, ກິດຈະກຳຮ່ວມມືພາຍໃຕ້ບັນດາກົນໄກການຮ່ວມມືລາວ ແລະ ຍີ່ປຸ່ນ ໂດຍສະເພາະການຊ່ວຍເຫຼືອໃນການຍົກລະດັບສີມືແຮງງານໃຫ້ແຮງງານລາວໃຫ້ມີປະສິດທິພາບສູງຂຶ້ນ ເພື່ອໃຫ້ກາຍເປັນແຮງງານທີ່ມີຄຸນນະພາບ, ມີຄວາມຊຳນານງານ ແລະ ເປັນຊ່ຽວຊານສະເພາະດ້ານ.

# ປາຖະກະຖາວັນສ້າງຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວ



(ສພຊ) ເພື່ອທວນຄືນມູນເຊື້ອແຫ່ງການກຳເນີດ, ເຕີບໃຫຍ່ຂະຫຍາຍຕົວຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ໃນໄລຍະພາລະກິດປະຕິວັດ ໃນໄລຍະຕໍ່ສູ້ປົດປ່ອຍຊາດ ແລະ ໄລຍະພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດ ພາຍໃຕ້ການນຳພາໂດຍກົງຮອບດ້ານຂອງພັກປະຊາຊົນປະຕິວັດລາວ ທີ່ເຕັມໄປດ້ວຍຄວາມອົງອາດກ້າຫານ, ເສຍສະຫຼະຢ່າງພິລະອາດຫານ, ຫ້າວຫັນປະຈັນບານເຂົ້າໃນທຸກວຽກງານຢ່າງສົມກຽດ ແນໃສ່ສ້າງຄວາມຮັບຮູ້, ເຂົ້າໃຈ, ເຊື່ອມຊຶມ, ກຳແໜ້ນມູນເຊື້ອ, ຄວາມໝາຍ, ຄວາມສຳຄັນ, ທີ່ຕັ້ງ, ບົດບາດ, ໜ້າທີ່ຂອງການຈັດຕັ້ງຊາວໜຸ່ມ, ຊາວໜຸ່ມລາວບັນດາເຜົ່າ ແລະ ຜັນຂະຫຍາຍເປັນກິດຈະກຳຕົວຈິງເຂົ້າໃນພາລະກິດການເມືອງໃນໄລຍະໃໝ່ຂອງຕົນ; ເຕົ້າໂຮມ ແລະ ປຸກລະດົມກຳລັງແຮງສັງລວມຂອງທົ່ວສັງຄົມ ແລະ ຊາວໜຸ່ມລາວເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃນໄລຍະໃໝ່ ໂດຍສະເພາະການປະຈັນບານເຂົ້າໃນການສະກັດກັ້ນ ແກ້ໄຂບັນຫາປາກົດການຫຍໍ້ທໍ້ທີ່ມີໃນສັງຄົມ ແລະ ການຊຸກຍູ້ການແກ້ໄຂບັນຫາວຽກເຮັດງານທຳໃຫ້ຊາວໜຸ່ມລາວບັນດາເຜົ່າ ແລະ ເພື່ອເປັນການເຝິກຝົນຫຼໍ່ຫຼອມຄວາມຮູ້ຄວາມສາມາດ ແລະ ຄຸນທາດການເມືອງໃຫ້ຊາວໜຸ່ມ ແນໃສ່ກາຍເປັນຜູ້ສືບທອດພາລະກິດຂອງພັກທີ່ມີຄຸນນະພາບ.

ໃນວັນທີ 27 ເມສາ 2023 ທີ່ສະພາແຫ່ງຊາດ ຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ໄດ້ປາຖະກະຖາວັນສ້າງຕັ້ງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຄົບຮອບ 68 ປີ (14 ເມສາ 1955-14 ເມສາ 2023) ໂດຍການເປັນປະທານຂອງສະຫາຍພອນແກ້ວ ຕົ້ນວໍລະຈິດ ກຳມະການຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ, ມີບັນດາທ່ານຕາງໜ້າຄະນະບໍລິຫານງານພັກສະພາແຫ່ງຊາດ, ຮອງເລຂາ ແລະ ຄະນະປະຈຳຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ສະໄໝທີ IV, ກຳມະການຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ສະໄໝທີ IV, ຕາງໜ້າຄະນະສະຫະພັນກຳມະບານ, ສະຫະພັນແມ່ຍິງ ແລະ ສະມາຊິກຊາວໜຸ່ມພາຍໃນສະພາແຫ່ງຊາດເຂົ້າຮ່ວມ.

ໃນພິທີຄັ້ງນີ້, ຜູ້ເຂົ້າຮ່ວມໄດ້ຮັບຟັງການປາຖະກະຖາວັນສ້າງຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວ ຈາກສະຫາຍບຸນຕາ ເທບພະວົງ ກຳມະການສຳຮອງສູນກາງພັກ, ຄະນະພັກສະພາແຫ່ງຊາດ, ຮອງປະທານກຳມາທິການແຜນການ ການເງິນ ແລະ ການກວດສອບ.

(ສອນສັກ ວັນວິໄຊ)





## ຕິດຕາມ...

(ຕໍ່ຈາກໜ້າ 1)

ກົດໝາຍ, ມີທ່ານ ສົມຈິດ ປັນຍາສັກ ກຳມະການປະຈຳພັກແຂວງ, ຮອງເຈົ້າແຂວງ; ບັນດາທ່ານໃນຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ, ຄະນະທີມງານຈາກສະພາແຫ່ງຊາດ, ຜູ້ຕາງໜ້າຈາກສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ພະແນກການ, ອົງການອ້ອມຂ້າງ ແລະ ວິຊາການກ່ຽວຂ້ອງພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງການຜ່ານບົດລາຍງານໂດຍຫຍໍ້ກ່ຽວກັບຜົນຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ຈຳນວນ 4 ສະບັບ ຂອງສະພາປະຊາຊົນແຂວງ, ລາຍງານປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສານປະຊາຊົນ ສະບັບປີ 2017, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປີ 2017 ແລະ ໄດ້ຮັບຟັງບົດລາຍງານປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປີ 2017 ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປີ 2017; ຫລັງຈາກນັ້ນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ມີຄຳຄິດຄຳເຫັນແລກປ່ຽນກັນຢ່າງກົງໄປກົງມາ ຕໍ່ກັບບົດລາຍງານດັ່ງກ່າວຢ່າງມີຈຸດສຸມ.

ໃນຕອນທ້າຍກອງປະຊຸມ, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດໃນການຈັດຕັ້ງປະຕິບັດ 4 ກົດໝາຍດັ່ງກ່າວ ໃນໄລຍະຜ່ານ ແລະ ໄດ້ເນັ້ນໜັກບາງບັນຫາເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ ໃຫ້ໄດ້ຮັບຜົນດີຂຶ້ນກວ່າເກົ່າ.

(ແສງພອນ ອິນນະລົງ)





## ກຸ່ມບໍລິສັດ...

(ຕໍ່ຈາກໜ້າ 1)

(ສພຊ) ໃນລະຫວ່າງ ວັນທີ 27-28 ເມສາ 2023 ທ່ານ ດໍມິນິກ ສຄິສເວນ ປະທານກຸ່ມບໍລິສັດ ມັງກອນການລົງທຶນຫວຽດນາມ ພ້ອມດ້ວຍຄະນະ ໄດ້ຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ເພື່ອຮັບຮູ້ເຖິງການຈັດຕັ້ງປະຕິບັດພາລະບົດບາດ ຂອງອົງການນິຕິບັນຍັດ, ລະບຽບກົດໝາຍ ແລະ ແນວທາງນະໂຍບາຍ ຂອງ ສປປລາວ ໃຫ້ແກ່ນັກທຸລະກິດຕ່າງປະເທດ; ເພື່ອຊຸກຍູ້ ແລະ ສົ່ງເສີມການລົງທຶນ ຂອງນັກລົງທຶນຫວຽດນາມ ກໍຄືນັກທຸລະກິດທີ່ມາລົງທຶນ ຢູ່ ສປປລາວ ແລະ ການຊ່ວຍເຫຼືອ ຂອງ ສສ.ຫວຽດນາມ ຢູ່ ສປປລາວ ໃຫ້ຫຼາຍຂຶ້ນກວ່າເກົ່າ; ເພື່ອແລກປ່ຽນຂໍ້ມູນ-ຂ່າວສານ ດ້ານການຄ້າ-ການລົງທຶນ ເປັນຕົ້ນແມ່ນການດຶງດູດການລົງທຶນຕ່າງປະເທດ ແລະ ການຊອກຫາແຫຼ່ງທຶນໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ; ຈັດການປາຖະກະຖາກ່ຽວກັບສະພາບເສດຖະກິດ-ການເງິນ ຂອງພາກພື້ນ ແລະ ສາກົນ, ການດຶງດູດການລົງທຶນຕ່າງປະເທດ ຢູ່ ສປປລາວ ໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ພະນັກງານ-ລັດຖະກອນ ພາຍໃນສະພາແຫ່ງຊາດ.

ການເຄື່ອນໄຫວຄັ້ງນີ້, ຄະນະ ໄດ້ພົບປະເຮັດວຽກກັບທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ ການເງິນ ແລະ ການກວດສອບ ສະພາແຫ່ງຊາດ ທີ່ສະພາແຫ່ງຊາດ ເຊິ່ງທ່ານ ປອ. ລີເບີ ລີບົວປາວ ກໍໄດ້ຍົກໃຫ້ເຫັນເຖິງພາລະບົດບາດຂອງສະພາແຫ່ງຊາດ, ພາລະບົດບາດຂອງກຳມາທິການແຜນການ ການເງິນ ແລະ ການກວດສອບ, ສະພາບການພັດທະນາເສດຖະກິດໃນໄລຍະຜ່ານມາ, ແຜນພັດທະນາເສດຖະກິດ-ສັງຄົມ, ນະໂຍບາຍສົ່ງເສີມການລົງທຶນ, ກາລະໂອກາດ ແລະ ທ່າແຮງໄດ້ປຽບ ແລະ ອື່ນໆ; ຈາກນັ້ນ, ທ່ານປະທານກຸ່ມບໍລິສັດ ມັງກອນການລົງທຶນຫວຽດນາມ ພ້ອມດ້ວຍຄະນະ ກໍໄດ້ເຂົ້າຢ້ຽມຂໍ່ານັບລັດຖະມົນຕີກະຊວງການເງິນ, ເຂົ້າຢ້ຽມຂໍ່ານັບຜູ້ວ່າການທະນາຄານ ແຫ່ງ ສປປລາວ ແລະ ພົບປະກັບຕາງໜ້າຈາກກະຊວງແຜນການ ແລະ ການລົງທຶນ.

ວັນທີ 28 ເມສາ ໄດ້ຈັດກອງປະຊຸມປາຖະກະຖາ ຫົວຂໍ້ "ສະພາບເສດຖະກິດ-ການເງິນ ຂອງພາກພື້ນ ແລະ ສາກົນ, ການດຶງດູດການລົງທຶນຕ່າງປະເທດ ຢູ່ ສປປລາວ" ຂອງ ກຸ່ມບໍລິສັດມັງກອນການລົງທຶນ ໂດຍການເປັນປະທານ ຂອງທ່ານ ປອ. ລີເບີ ລີບົວປາວ ເຂົ້າຮ່ວມມີບັນດາຮອງປະທານກຳມາທິການ, ຫົວໜ້າ-ຮອງຫົວໜ້າກົມ ແລະ ພະນັກງານວິຊາການ ພ້ອມນັ້ນ, ຍັງມີບັນດາສະມາຊິກສະພາແຫ່ງຊາດຈາກເຂດເລືອກຕັ້ງທົ່ວປະເທດເຂົ້າຮ່ວມດ້ວຍຮູບແບບວິດີໂອທາງໄກ. ໃນກອງປະຊຸມທ່ານ ດໍມິນິກ ສຄິສເວນ ໄດ້ຂຶ້ນສະເໜີບົດໃນຫົວຂໍ້ "ສະພາບເສດຖະກິດ-ການເງິນ ຂອງພາກພື້ນ ແລະ ສາກົນ, ການດຶງດູດການລົງທຶນຕ່າງປະເທດ ຢູ່ ສປປລາວ". ຈາກນັ້ນ, ໄດ້ມີການຖາມ-ຕອບແລກປ່ຽນສົນທະນາຮ່ວມກັນ.

ໃນວັນດຽວກັນ, ທ່ານ ດໍມິນິກ ສຄິສເວນ ໄດ້ເຂົ້າຢ້ຽມຂໍ່ານັບທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ໂອກາດດັ່ງກ່າວ ທ່ານປະທານສະພາແຫ່ງຊາດ, ກໍໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ພ້ອມອວຍພອນໃຫ້ການເຄື່ອນໄຫວເຮັດວຽກຢູ່ ສປປລາວ ຂອງທ່ານ ດໍມິນິກ ສຄິສເວນ ພ້ອມດ້ວຍຄະນະ ຈົ່ງປະສົບຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້. ຈາກນັ້ນ, ທ່ານ ດໍມິນິກ ສຄິສເວນ ກໍໄດ້ສະແດງຄວາມຂອບໃຈເປັນຢ່າງຍິ່ງຕໍ່ການຕ້ອນຮັບອັນອົບອຸ່ນ ພ້ອມທັງລາຍງານໃຫ້ຊາບກ່ຽວກັບພາລະບົດບາດຂອງກຸ່ມບໍລິສັດ ມັງກອນການລົງທຶນຫວຽດນາມ ແລະ ລາຍງານໃຫ້ຊາບຕື່ມອີກກ່ຽວກັບຈຸດປະສົງທີ່ເດີນທາງມາເຄື່ອນໄຫວເຮັດວຽກຢູ່ ສປປລາວ ໃນຄັ້ງນີ້.



## ເພີ່ມທະວີ...

(ຕໍ່ຈາກໜ້າ 1)

ການ, ລັດຖະມົນຕີ-ຮອງລັດຖະມົນຕີ, ຕາງໜ້າຄະນະເລຂາທິການ, ຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ ເຊິ່ງກອງປະຊຸມມີສອງຮູບແບບຄື: ແບບອອນລາຍ ແລະ ກັບທີ່ສ່ວນພະແນກແຜນການ ແລະ ການລົງທຶນຂອງແຂວງຫົວພັນ, ແຂວງວຽງຈັນ, ສະຫວັນນະເຂດ ແລະ ແຂວງຈຳປາສັກ ເຂົ້າຮ່ວມໃນຮູບແບບອອນລາຍ.

ທັງນີ້, ແມ່ນເພື່ອຈັດຕັ້ງປະຕິບັດຕາມແຜນການເພີ່ມທະວີການຄຸ້ມຄອງການລົງທຶນຂອງລັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ປະກອບສ່ວນເຂົ້າໃນການປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຂໍ້ຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃຫ້ບັນລຸຕາມແຜນ ກໍຄືການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ຂະຫຍາຍຕົວຕາມທິດມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ ເຊິ່ງເປັນເປົ້າໝາຍທີ 1 ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕາມທີ່ໄດ້ກຳນົດໃນແຜນ 5 ປີ ຄັ້ງທີ IX (2021-2025) ເວົ້າລວມ, ເວົ້າສະເພາະ ແມ່ນປະຕິບັດການຈັດສັນງົບປະມານລົງທຶນຂອງລັດໃຫ້ສອດຄ່ອງຕາມລັດຖະທຳມະນູນ, ກົດໝາຍ ໃຫ້ມີຜົນສັກສິດ ແລະ ມີປະສິດທິພາບ ທັນເວລາພິຈາລະນາຮັບຮອງຢູ່ກອງປະຊຸມສະພາແຫ່ງຊາດ ແລະ ຈັດຕັ້ງປະຕິບັດຕາມແຜນງົບປະມານປະຈຳປີ ໃຫ້ມີຜົນສັກສິດ ຕາມທີ່ໄດ້ກຳນົດໃນກົດໝາຍ ກໍຄືການສ້າງແຜນການລົງທຶນຂອງລັດ ໃຫ້ສອດຄ່ອງຕາມຄວາມສາມາດ ສະໜອງແຫຼ່ງທຶນຕົວຈິງ; ການຈັດສັນງົບປະມານຕົວຈິງ ຮັບປະກັນຄວາມຍຸຕິທຳ, ມີຈຸດສຸມ, ເປັນບູລິມະສິດ, ມີການກະຈາຍ ແລະ ການດຸນດ່ຽງການລົງທຶນ ລະຫວ່າງຂະແໜງການສູນກາງ ແລະ ທ້ອງຖິ່ນ ແລະ ລະຫວ່າງເຂດແຄວ້ນ ໃຫ້ສົມເຫດສົມຜົນ; ປັບປຸງຫຼັກການ ແລະ ກົນໄກການຈັດສັນງົບປະມານໃຫ້ຈະແຈ້ງ, ມີຄວາມໂລ່ງລ່ຽນ ແລະ ນຳໃຊ້ເຕັກນິກການຈັດສັນງົບປະມານໃຫ້ທັນສະໄໝຫຼາຍຂຶ້ນ.

ກອງປະຊຸມ, ໄດ້ຮັບຟັງການລາຍງານຈາກບັນດາທ່ານຮອງລັດຖະມົນຕີທີ່ກ່ຽວຂ້ອງ ເປັນຕົ້ນສະພາບການຈັດສັນງົບປະມານການລົງທຶນຂອງລັດປີ 2023; ສະພາບການຈັດສັນບ້ວງຈັດຮັບ-ຈັດຈ່າຍ ແລະ ລົງທຶນອື່ນໆປີ 2023 ທີ່ກະຊວງການເງິນຄຸ້ມຄອງ; ສະພາບການຈັດສັນງົບປະມານ ໂຄງການລົງທຶນຂອງລັດ ບ້ວງກອງທຶນທາງ ປີ 2023 ທີ່ກະຊວງໂຍທາທິການ ແລະ ຂົນສົ່ງຄຸ້ມຄອງ; ສະພາບການຈັດສັນງົບປະມານໂຄງການລົງທຶນຂອງລັດ ບ້ວງພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ປີ 2023 ທີ່ກະຊວງກະສິກຳ ແລະ ປ່າໄມ້ ຄຸ້ມຄອງ; ສະພາບການຈັດສັນງົບປະມານ ໂຄງການລົງທຶນຂອງລັດ ບ້ວງໄພພິບັດ ປີ 2023 ທີ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຄຸ້ມຄອງ; ສະພາບການຈັດສັນງົບປະມານ ແລະ ຄຸ້ມຄອງ ກອງທຶນຄົ້ນຄວ້າວິທະຍາສາດ ປີ 2023 ທີ່ກະຊວງສຶກສາທິການ ແລະ ກິລາ ຄຸ້ມຄອງ; ພ້ອມນັ້ນ, ບັນດາຜູ້ເຂົ້າຮ່ວມ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ໄດ້ມີຄຳເຫັນກັບທີ່ ແລະ ຮູບແບບອອນລາຍ ກ່ຽວກັບສະພາບການຈັດສັນງົບປະມານການລົງທຶນຂອງລັດປີ 2023; ການປະຕິບັດພາລະບົດບາດຂອງສະພາປະຊາຊົນແຂວງ ທີ່ຕິດພັນກັບການຈັດສັນງົບປະມານຂອງລັດຕໍ່ບັນຫາທີ່ຕັ້ງຂຶ້ນ ກໍຄືຂໍ້ສະເໜີຕ່າງໆ ເພື່ອຊອກວິທີແກ້ໄຂ ເຮັດໃຫ້ວຽກງານຈັດສັນງົບປະມານ ມີປະສິດທິພາບແລະປະສິດທິຜົນຫຼາຍຂຶ້ນ;

ໃນໂອກາດນີ້, ປະທານກອງປະຊຸມ ມີຄຳເຫັນຊີ້ນຳຕື່ມກ່ຽວກັບຂໍ້ມູນສຳລັບຮັບໃຊ້ການລົງທຶນຂອງລັດ ທີ່ບໍ່ທັນຊັດເຈນ ຈະແຈ້ງ, ກົນໄກ, ຂັ້ນຂອດ ທີ່ຕິດພັນກັບແບບແຜນເຮັດວຽກຂອງແຕ່ລະຂັ້ນ ແລະ ຂະແໜງການຈຳນວນໜຶ່ງ ຄວນໄດ້ຮັບການເອົາໃຈໃສ່ແກ້ໄຂ ເຊິ່ງໃນນີ້ຫາກລົງເລິກ ຫຼືວິເຄາະວິໄຈແລ້ວ ການປະຕິບັດຕາມກົດໝາຍ ບາງກົດໝາຍບໍ່ທັນຖືກຕ້ອງ ແລະ ສັກສິດ, ການແບ່ງຂັ້ນນັ້ນແບ່ງແລ້ວ ແຕ່ການປະຕິບັດຕົວຈິງ ຍັງບໍ່ທັນໄປຕາມຕົວຈິງ ຈຶ່ງສະເໜີໃຫ້ກົມກ່ຽວຂ້ອງຂອງກະຊວງຕ່າງໆ ສືບຕໍ່ຄົ້ນຄວ້າ ແລະ ສຳລັບການສະເໜີຂອງທ້ອງຖິ່ນທີ່ວ່ານິຕິກຳຈຳນວນໜຶ່ງ ມີອັນທັບຊ້ອນ ຍັງແຕະຕ້ອງກັນ ແລະ ກັນນັ້ນ ໃຫ້ສະເໜີເປັນລາຍລັກອັກສອນ ວ່ານິຕິກຳໃດ ແລະ ມາດຕາໃດ ເພື່ອເປັນບ່ອນອີງໃຫ້ຂັ້ນເທິງສືບຕໍ່ຄົ້ນຄວ້າປັບປຸງ.



(ນາງ ກິ່ງໃຈ ແສງອຳພັນ)

# ຮອງປະທານ ສປນວ ຕ້ອນຮັບຄະນະຜູ້ແທນ ສະພາປະຊາຊົນນະຄອນຫຼວງຮ່າໂນ້ຍ



(ສພຊ) ໃນວັນທີ 21 ເມສາ 2023 ຄະນະຜູ້ແທນສະພາປະຊາຊົນນະຄອນຫຼວງວຽງຈັນ ນຳໂດຍສະຫາຍ ນາງ ລຳພອຍ ສີອັກຄະຈັນ ກຳມະການປະຈຳພັກນະຄອນຫຼວງວຽງຈັນ, ຮອງປະທານສະພາປະຊາຊົນວຽງຈັນ (ສປນວ) ພ້ອມດ້ວຍຄະນະ ໄດ້ໃຫ້ການຕ້ອນຮັບຄະນະຜູ້ແທນສະພາປະຊາຊົນນະຄອນຫຼວງຮ່າໂນ້ຍ ສສ. ຫວຽດນາມ ນຳໂດຍສະຫາຍ ນາງ ຟຸງ ທິ ຫົງ ຮ່າ ກຳມະການປະຈຳພັກ, ຮອງປະທານສະພາປະຊາຊົນນະຄອນຫຼວງຮ່າໂນ້ຍ ຜູ້ປະຈຳການ ພ້ອມດ້ວຍຄະນະທີ່ໄດ້ເດີນທາງມາຢ້ຽມຢາມ ແລະ ພົບປະເຮັດວຽກຢູ່ ສປປ ລາວ ຢ່າງເປັນທາງການ.

ໃນກອງປະຊຸມພົບປະຄັ້ງນີ້, ສປນວ ສປປລາວ ໄດ້ມີການສຳມະນາແລກປ່ຽນບົດຮຽນຢ່າງກົງໄປກົງມາກັບຄະນະຜູ້ແທນຮ່າໂນ້ຍ ສສ.ຫວຽດນາມ ໃນຫົວຂໍ້ຕ່າງໆ ເປັນຕົ້ນແມ່ນບົດຮຽນໃນການດຳເນີນການພິຈາລະນາແກ້ໄຂຄຳຮ້ອງທຸກ, ຄຳສະເໜີຂອງປະຊາຊົນ, ການສ້າງ ແລະ ການປະກາດມະຕິຂອງສະພາປະຊາຊົນ ນະຄອນຫຼວງຮ່າໂນ້ຍ; ວຽກງານແຜນການລົງທຶນ ແລະ ພັດທະນາຕົວເມືອງຢູ່ທ້ອງຖິ່ນ; ການຮ່າງບົດລາຍງານ, ຮ່າງມະຕິຕົກລົງກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ການຕິດຕາມກວດກາການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ການສ້າງກົນໄກ, ນະໂຍບາຍ, ການຕິດຕາມກວດກາວຽກງານຊ່ວຍເຫຼືອພັດທະນາກະສິກຳ, ຊົນນະບົດຂອງນະຄອນຫຼວງຮ່າໂນ້ຍ.

ນອກຈາກນີ້, ຄະນະຜູ້ແທນ ສປນວ ຍັງມີຄວາມສົນໃຈ ແລະ ໄດ້ສົນທະນາແລກປ່ຽນກ່ຽວກັບຂໍ້ຄົງຄ້າງ ແລະ ທິດທາງໃນການແກ້ໄຂຂອງສະພາປະຊາຊົນນະຄອນຮ່າໂນ້ຍ ເພື່ອຈະເປັນບົດຮຽນໃນການແກ້ໄຂຂໍ້ຄົງຄ້າງບາງດ້ານຂອງວຽກງານສະພາປະຊາຊົນ ນະຄອນຫຼວງ ໃນຕໍ່ໜ້າອີກດ້ວຍ.

ໃນວັນດຽວກັນນີ້, ຄະນະຜູ້ແທນສະພາປະຊາຊົນນະຄອນຫຼວງຮ່າໂນ້ຍ ນຳໂດຍສະຫາຍ ນ. ຟຸງ ທິ ຫົງ ຮ່າ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂ່ຳນັບສະຫາຍ ອານຸພາບ ຕຸນາລົມ ຄະນະເລຂາທິການສູນກາງພັກ, ເລຂາຄະນະພັກ, ປະທານ ສະພາປະຊາຊົນນະຄອນຫຼວງວຽງຈັນ ຢູ່ສຳນັກງານປົກຄອງ ນະຄອນຫຼວງວຽງຈັນ ເພື່ອເສີມຂະຫຍາຍຕໍ່ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກແບບພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ 2 ພັກ, 2 ລັດຖະບານ ແລະ ປະຊາຊົນທັງຊາດ ລາວ-ຫວຽດນາມ ເວົ້າລວມ ເວົ້າສະເພາະແມ່ນສອງສະພາປະຊາຊົນນະຄອນຫຼວງ ນັບທັງປະຊາຊົນຊາວນະຄອນຫຼວງວຽງຈັນ ແລະ ປະຊາຊົນ ນະຄອນຫຼວງຮ່າໂນ້ຍ ໃຫ້ເຂົ້າສູ່ລວງເລິກ, ເຊິ່ງມີບັນດາທ່ານຄະນະປະຈຳສະພາປະຊາຊົນນະຄອນຫຼວງວຽງຈັນ, ບັນດາທ່ານຫົວໜ້າພະແນກການ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມຕ້ອນຮັບໃນການມາຢ້ຽມຢາມຄັ້ງນີ້.



# ໜ່ວຍພັກສະພາປະຊາຊົນແຂວງຄຳມ່ວນ ເປັນໜ່ວຍພັກ ປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022

(ສພຊ) ວັນທີ 20 ເມສາ 2023 ທີ່ສະພາປະຊາຊົນແຂວງຄຳມ່ວນ ໄດ້ຈັດພິທີມອບ-ຮັບໃບຍັ້ງຍືນເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ໂດຍການເຂົ້າຮ່ວມຂອງສະຫາຍ ບຸນມີ ພິມມະສອນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຄຳມ່ວນ; ມີບັນດາສະຫາຍທີ່ຕາງໜ້າຈາກຄະນະໂຄສະນາອົບຮົມແຂວງ, ຄະນະຈັດຕັ້ງແຂວງ, ຄະນະກວດກາພັກ-ລັດແຂວງ, ຄະນະພັກ ຕະຫຼອດຮອດສະມາຊິກພັກພາຍໃນໜ່ວຍສະພາປະຊາຊົນ



ແຂວງຄຳມ່ວນເຂົ້າຮ່ວມ.

ໃນພິທີ, ສະຫາຍ ນາງ ສາທິດ ຈັນສີ ຮອງເລຂາໜ່ວຍສະພາປະຊາຊົນແຂວງຄຳມ່ວນ ໄດ້ຂຶ້ນຜ່ານບົດສະຫຼຸບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023. ຈາກນັ້ນ, ຕາງໜ້າຈາກຄະນະຈັດຕັ້ງແຂວງ ກໍໄດ້ຂຶ້ນຜ່ານມະຕິຕົກລົງຂອງຄະນະປະຈຳພັກແຂວງຄຳມ່ວນ ສະບັບເລກທີ 08/ຄປຈ.ຄມ, ລົງວັນທີ 6 ກຸມພາ 2023 ວ່າດ້ວຍການຮັບຮອງເອົາໜ່ວຍພັກສະພາປະຊາຊົນແຂວງຄຳມ່ວນເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ໃຫ້ແກ່ໜ່ວຍສະພາປະຊາຊົນແຂວງຄຳມ່ວນ ພ້ອມນັ້ນກໍໄດ້ມອບໃບຍັ້ງຍືນໜ່ວຍພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ປະຈຳປີ 2022 ໃຫ້ແກ່ໜ່ວຍພັກສະພາປະຊາຊົນແຂວງຄຳມ່ວນ ເຊິ່ງຕາງໜ້າມອບໂດຍສະຫາຍ ບຸນມີ ພິມມະສອນ ແລະ ຮັບໂດຍສະຫາຍ ນາງ ສາທິດ ຈັນສີ.

ຕອນທ້າຍຂອງພິທີ, ສະຫາຍ ບຸນມີ ພິມມະສອນ ໄດ້ມີຄຳເຫັນໄດ້ໂອ້ລົມ ພ້ອມທັງໃຫ້ທິດຊີ້ນຳຕໍ່ກອງປະຊຸມ ໂດຍສະຫາຍໄດ້ສະແດງຄວາມຍ້ອງຍໍ, ຊົມເຊີຍຕໍ່ຜົນງານທີ່ຍາດມາໄດ້ໃນໄລຍະຜ່ານມາ ແລະ ໄດ້ເນັ້ນໜັກໃຫ້ຄະນະໜ່ວຍພັກ, ຕ້ອງສືບຕໍ່ສຶກສາອົບຮົມການເມືອງ-ນຳພາແນວຄິດໃຫ້ສະມາຊິກພັກ, ພະນັກງານພາຍໃນຢ່າງຕໍ່ເນື່ອງລຽນຕິດ, ນຳເອົາແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ເພື່ອໃຫ້ສະມາຊິກພັກ ແລະ ພະນັກງານມີຄວາມອຸ່ນອ່ຽນທຸນທຽງ ແລະ ເຊື່ອໝັ້ນຕໍ່ແນວທາງນະໂຍບາຍຂອງພັກ ພ້ອມນັ້ນ, ສະຫາຍຍັງໄດ້ເນັ້ນໜັກບາງບັນຫາຄື:

1. ສືບຕໍ່ເສີມຂະຫຍາຍມູນເຊື້ອຂອງໜ່ວຍພັກປອດໃສ ເຂັ້ມແຂງໜັກແໜ້ນໃຫ້ຍືນຍົງ.

2. ສືບຕໍ່ແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງໃຫ້ດີຂຶ້ນເທື່ອລະກ້າວ.

3. ສືບຕໍ່ປະຕິບັດຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາ ຄຽງຄູ່ກັບການປະຕິບັດໜ້າທີ່ວຽກງານວິຊາສະເພາະ ໃຫ້ຖືເອົາເນື້ອໃນຂໍ້ແຂ່ງຂັນເຂົ້າໃນແຜນການກໍ່ສ້າງໜ່ວຍພັກ.

4. ຕັ້ງໜ້າຍົກລະດັບຄວາມຮູ້, ຄວາມສາມາດໃຫ້ສູງຂຶ້ນ ໃຫ້ກາຍເປັນຜູ້ຊ່ຽວຊານ ເພື່ອພັດທະນາຕົນເອງ ແລະ ການຈັດຕັ້ງ, ຝຶກຝົນຫຼໍ່ຫຼອມຕົນເອງທາງດ້ານຄຸນທາດການເມືອງ ຄຸນສົມບັດສິນທຳປະຕິວັດ, ວຽກງານວິຊາສະເພາະ ແລະ ວຽກງານອື່ນໆທີ່ປົ່ນອ້ອມ.

5. ເພີ່ມທະວີຄວາມສາມັກຄີພາຍໃນໃຫ້ແໜ້ນແຟ້ນ ເພື່ອເປັນກຳລັງແຮງໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຫັນໄປສູ່ຄຸນນະພາບໃໝ່.

6. ໃນສະພາບເສດຖະກິດທີ່ມີຄວາມຫຍຸ້ງຍາກ ໃນປັດຈຸບັນໃຫ້ພະນັກງານລັດຖະກອນ ພະຍາຍາມຄົ້ນຄວ້າຫາວິທີແກ້ໄຂຊີວິດການເປັນຢູ່ຂອງຕົນຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງຖືກຕ້ອງຕາມລະບຽບກົດໝາຍ.

(ເອື້ອ ມະໂນສິງ)

# ປະທານສະພາປະຊາຊົນແຂວງບໍລິຄຳໄຊ ຕ້ອນຮັບຄະນະຈາກອົງການໄອຍະການປະຊາຊົນສູງສຸດ

(ສພຊ) ໃນຕອນເຊົ້າ ວັນທີ 24 ເມສາ 2023 ຢູ່ສະພາປະຊາຊົນແຂວງບໍລິຄຳໄຊ, ທ່ານ ປອ. ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງບໍລິຄຳໄຊ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບຄະນະຂອງທ່ານ ນາງ ພອນທິບ ສາວະລີ ຫົວໜ້າກົມກວດກາ, ອົງການໄອຍະການປະຊາຊົນສູງສຸດ ໃນໂອກາດທີ່ມາເຄື່ອນໄຫວຊຸກຍູ້ວຽກງານສະເພາະດ້ານຢູ່ແຂວງບໍລິຄຳໄຊ.



ທ່ານ ນາງ ພອນທິບ ສາວະລີ ໄດ້ລາຍງານຈຸດປະສົງຂອງການມາເຄື່ອນໄຫວວຽກງານຢູ່ແຂວງບໍລິຄຳໄຊ ເປັນຕົ້ນແມ່ນການລົງມາຊຸກຍູ້, ຕິດຕາມ ແລະ ວຽກງານກວດກາທົ່ວໄປຂອງອົງການໄອຍະການປະຊາຊົນແຂວງ ໄລຍະ 1 ປີຜ່ານມາ ແລະ ການຮັບຄຳສະເໜີບາງຂໍ້ຫຍຸ້ງຍາກການປະຕິບັດວຽກງານຂັ້ນທ້ອງຖິ່ນເພື່ອນຳໄປສະເໜີພິຈາລະນາຢູ່ຂັ້ນຄະນະບໍລິຫານງານພັກອົງການໄອຍະການປະຊາຊົນສູງສຸດ.

ໂອກາດດັ່ງກ່າວ, ທ່ານ ປອ. ສຸວັນນີ ໄຊຊະນະ ໄດ້ກ່າວຕ້ອນຮັບ ພ້ອມທັງລາຍງານສະພາບໂດຍລວມການແກ້ໄຂບາງບັນຫາທາງສັງຄົມ ເປັນຕົ້ນແມ່ນຄຳຮ້ອງທຸກ, ຄຳສະເໜີຂອງປະຊາຊົນກ່ຽວກັບຄຳຕັດສິນຂອງສານ ໄລຍະ 1 ປີຜ່ານມາ ພ້ອມທັງໃຫ້ທິດຊີ້ນຳບາງດ້ານໃນການລົງຊຸກຍູ້ ຕິດຕາມ ກວດກາ ວຽກງານຢູ່ຂັ້ນແຂວງ ແລະ ຂັ້ນເມືອງ ທັ້ງນີ້ກໍ່ເພື່ອເປັນບ່ອນອີງຂໍ້ມູນເບື້ອງຕົ້ນໃນການປະຕິບັດວຽກງານສະເພາະດ້ານ ຕິດພັນກັບສະພາບຄວາມເປັນຈິງຂອງທ້ອງຖິ່ນ.

## ທາບທາມປະກອບຄຳເຫັນໃສ່ກົດໝາຍ ຈຳນວນ 11 ສະບັບ



(ສພຊ) ເພື່ອປະຕິບັດຕາມແຜນການຂອງສະພາແຫ່ງຊາດ ວ່າດ້ວຍການສ້າງ ແລະ ປັບປຸງກົດໝາຍມີຄວາມຖືກຕ້ອງສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍເທື່ອລະກ້າວ ທັງຮັບປະກັນເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍ ຈຳນວນ 11 ສະບັບມີຄວາມຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ ແລະ ຮັບປະກັນເຖິງຜົນປະໂຫຍດລວມ.

ໃນວັນທີ 28 ເມສາ 2023 ທີ່ຫ້ອງປະຊຸມໃຫຍ່ຂອງສະພາປະຊາຊົນແຂວງຜົ້ງສາລີ ໄດ້ຈັດກອງປະຊຸມທາບທາມ ແລະ ປະກອບຄຳຄິດຄຳເຫັນໃສ່ຮ່າງກົດໝາຍຈຳນວນ 11 ສະບັບ ໂດຍການເປັນປະທານຂອງທ່ານ ທອງສີ ເສົາສຸລິພົມ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 2, ປະທານສະພາປະຊາຊົນແຂວງຜົ້ງສາລີ; ມີບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 2, ສະມາຊິກສະພາປະຊາຊົນແຂວງ, ບັນດາພາກສ່ວນກ່ຽວຂ້ອງຂັ້ນແຂວງ, ພາກສ່ວນກ່ຽວຂ້ອງຂອງສະພາປະຊາຊົນແຂວງ ແລະ ບັນດາລັດວິສາຫະກິດ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງທ່ານ ຄຳດາ ໂສລະພົມ ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ຂຶ້ນຜ່ານບົດສະເໜີການສ້າງ ແລະ ປັບປຸງຮ່າງກົດໝາຍ ຈຳນວນ 11 ສະບັບ ໃນນີ້, ກົດໝາຍສ້າງໃໝ່ ຈຳນວນ 5 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ, ຮ່າງກົດໝາຍວ່າດ້ວຍການປົກຄອງ, ຮ່າງກົດໝາຍວ່າດ້ວຍການຈັດຫາງານ, ຮ່າງກົດໝາຍວ່າດ້ວຍອາກອນທີ່ດິນ ແລະ ຮ່າງກົດໝາຍວ່າດ້ວຍວຽກງານສາທາລະນະສຸກ; ກົດໝາຍປັບປຸງ ຈຳນວນ 6 ສະບັບ ຄື: ກົດໝາຍວ່າດ້ວຍການພິມຈຳໜ່າຍ, ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ, ກົດໝາຍວ່າດ້ວຍສັດປ່າ, ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ກົດໝາຍວ່າດ້ວຍສານທະຫານ.

ໃນທີ່ປະຊຸມ, ປະທານກອງປະຊຸມໄດ້ຕັ້ງຄຳຖາມເຈາະຈີ້ມ ເພື່ອໃຫ້ບັນດາພາກສ່ວນກ່ຽວຂ້ອງ ໄດ້ຂຶ້ນລາຍງານການຄົ້ນຄວ້າຕາມຄຳຖາມເຈາະຈີ້ມດັ່ງກ່າວ ແລະ ປະກອບຄຳຄິດເຫັນໃສ່ຮ່າງກົດໝາຍເຫຼົ່ານັ້ນ. ນອກຈາກນີ້, ບັນດາທ່ານສະມາຊິກສະພາແຫ່ງຊາດ, ສະພາປະຊາຊົນແຂວງ ຍັງໄດ້ມີຄຳຄິດຄຳເຫັນເພີ່ມຕື່ມ ແນໃສ່ເຮັດໃຫ້ເນື້ອໃນມີຄວາມຖືກຕ້ອງ, ຄົບຖ້ວນ ແລະ ສອດຄ່ອງກັບສະພາບຕົວຈິງ ເພື່ອສັງລວມລາຍງານໃຫ້ສະພາແຫ່ງຊາດ ທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX.

## ປະກອບຄຳຄິດຄຳເຫັນໃສ່ຮ່າງກົດໝາຍ

(ສພຊ) ໃນວັນທີ 26 ເມສາ 2023 ທີ່ຫ້ອງປະຊຸມໃຫຍ່ຂອງສະພາປະຊາຊົນແຂວງຫຼວງພະບາງ ໄດ້ເປີດກອງປະຊຸມທາບທາມຄຳຄິດເຫັນໃສ່ຮ່າງກົດໝາຍ ຈຳນວນ 4 ສະບັບ ໂດຍການເປັນປະທານຂອງທ່ານ ວົງສະຫວັນ ເທບພະຈັນ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6, ມີບັນດາສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6, ມີທ່ານຮອງເຈົ້າແຂວງ, ສະມາຊິກສະພາປະຊາຊົນແຂວງ ແລະ ມີບັນດາທ່ານຫົວໜ້າ-ຮອງຫົວໜ້າພະແນກທີ່ກ່ຽວຂ້ອງອ້ອມຂ້າງ.

ກອງປະຊຸມໄດ້ຮັບຟັງການລາຍງານສະພາບລວມໂດຍຫຍໍ້ໃນການຈັດຕັ້ງປະຕິບັດທີ່ຜ່ານມາ ຂອງບັນດາກົດໝາຍ ທີ່ເຫັນວ່າຍັງບໍ່ທັນສອດຄ່ອງຮັດກຸມກັບສະພາບໃນປັດຈຸບັນ. ສະນັ້ນ, ຈຶ່ງໄດ້ມີການເປີດກອງປະຊຸມທາບທາມຄຳຄິດເຫັນໃສ່ ເພື່ອປັບປຸງຮ່າງກົດໝາຍ ຈຳນວນ 4 ສະບັບ ນີ້ຂຶ້ນຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ເພື່ອສະຫຼຸບຕີລາຄາຄືນໃນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວໃນໄລຍະຜ່ານມາ ເພື່ອໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6, ສະມາຊິກສະພາປະຊາຊົນແຂວງ ແລະ ຜູ້ແທນກອງປະຊຸມ ປະກອບຄຳຄິດເຫັນໃສ່ແຕ່ລະບັນດາຮ່າງກົດໝາຍໃຫ້ມີເນື້ອໃນຮັດກຸມ ແລະ ແທດເໝາະກັບສະພາບການຈັດຕັ້ງປະຕິບັດໃນປັດຈຸບັນ.

ໃນຕອນທ້າຍ ປະທານກອງປະຊຸມ, ໄດ້ເນັ້ນໜັກໃຫ້ບັນທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6, ສະມາຊິກສະພາປະຊາຊົນແຂວງ ແລະ ບັນດາທ່ານຫົວໜ້າ-ຮອງຫົວໜ້າພະແນກການທີ່ກ່ຽວຂ້ອງ ຈຶ່ງເປັນເຈົ້າການໃນການຈັດຕັ້ງປະຕິບັດບັນດານິຕິກຳ, ກົດໝາຍ ແລະ ນຳເອົາບັນດາເນື້ອໃນຈິດໃຈຂອງບັນດາກົດໝາຍ ໄປເຜີຍແຜ່ອອກສູ່ສັງຄົມ.

(ວິລີຍະ ວັນນະສີ)



## ສພຂ ວຽງຈັນ ຈັດກອງປະຊຸມການຕິດຕາມກວດກາ ປະເມີນຜົນການປະຕິບັດກົດໝາຍ ໃນຂົງເຂດຍຸຕິທຳ



(ສພຊ) ໃນວັນທີ 25 ເມສາ 2023 ສະພາປະຊາຊົນແຂວງວຽງຈັນ ໄດ້ເປີດກອງປະຊຸມປຶກສາຫາລືກ່ຽວກັບວຽກງານການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບຄື: ກົດໝາຍວ່າດ້ວຍສານປະຊາຊົນ ສະບັບປີ 2017; ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປີ 2017; ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປີ 2017; ກົດໝາຍວ່າດ້ວຍຄະດີອາຍາ ສະບັບປີ 2017 ທີ່ຈະນຳລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ່ 5 ຂອງສະພາແຫ່ງຊາດ ຊຸດທີ IX ພາຍໃຕ້ການເປັນປະທານຂອງທ່ານ ບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ; ເຂົ້າຮ່ວມມີຮອງປະທານສະພາປະຊາຊົນແຂວງ, ຮອງຄະນະກຳມະການ, ພະແນກການທີ່ກ່ຽວຂ້ອງຂັ້ນແຂວງພ້ອມດ້ວຍວິຊາການເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງ, ກໍເພື່ອເຮັດໃຫ້ມີເນື້ອໃນຄົບຖ້ວນ, ຖືກຕ້ອງ, ສອດຄ່ອງຕາມກົດໝາຍ ແລະ ແທດເໝາະກັບຕົວຈິງ; ພ້ອມດຽວກັນນັ້ນ, ບັນດາທານເຂົ້າຮ່ວມກອງປະຊຸມຍັງໄດ້ແລກປ່ຽນປະກອບຄຳຄິດຄຳເຫັນຕໍ່ການປະເມີນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດຍຸຕິທຳຢ່າງມີຈຸດສຸມ ເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດ ແລະ ຮັບປະກັນຄຸນນະພາບສຳເລັດຕາມລະດັບຄາດໝາຍ.

## ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງສາລະວັນ




(ສພຊ) ໃນວັນທີ 25 ເມສາ 2023 ຄະນະປະຈຳສະພາປະຊາຊົນແຂວງສາລະວັນ ໄດ້ເປີດກອງປະຊຸມສະຫຼຸບວຽກງານ ປະຈຳເດືອນເມສາ 2023 ໂດຍການເປັນປະທານກອງປະຊຸມຂອງທ່ານ ສີເຮັງ ຫອມສົມບັດ ປະທານຄະນະປະຈຳສະພາປະຊາຊົນແຂວງສາລະວັນ; ເຂົ້າຮ່ວມມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ ພ້ອມດ້ວຍຫົວໜ້າຂະແໜງ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການເຂົ້າຮ່ວມ.

ທ່ານ ສົມພອນ ແສງສຸລິຈັນ ເລຂາທິການສະພາປະຊາຊົນແຂວງ ໄດ້ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາປະຊາຊົນແຂວງສາລະວັນ ປະຈຳເດືອນເມສາ ແລະ ແຜນການປະຈຳເດືອນພຶດສະພາ; ຕະຫຼອດໄລຍະໜຶ່ງເດືອນຜ່ານມາ ຄະນະປະຈຳ ໄດ້ເອົາໃຈໃສ່ຊີ້ນຳ-ນຳພາການເຄື່ອນໄຫວປະຕິບັດໜ້າທີ່ວຽກງານເຊິ່ງສະແດງໃຫ້ເຫັນຜົນສຳເລັດໃນ 3 ພາລະບົດບາດ ແລະການເຄື່ອນໄຫວວຽກງານ ປົ່ນອ້ອມ; ຈາກນັ້ນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳຄິດເຫັນ ແລະ ລາຍງານຕໍ່ກັບໜ້າທີ່ວຽກງານງານຂອງຕົນຮັບຜິດຊອບຢ່າງເປັນເຈົ້າການ, ພ້ອມທັງເອກະພາບກັນຕົກລົງເອົາວຽກງານສຳຄັນໃນ 1 ເດືອນຕໍ່ໜ້າ ເຊັ່ນ: ກະກຽມຈັດຕັ້ງທາບທາມຮ່າງກົດໝາຍ ຈຳນວນ 11 ສະບັບ ຕາມຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ; ກະກຽມປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ໃນຂົງເຂດຍຸຕິທຳ; ກະກຽມຈັດກອງປະຊຸມສະຫລຸບການເຄື່ອນໄຫວວຽກງານປະຈຳປີ 2022 ຂອງຄະນະປະສານງານປົກປ້ອງກົດໝາຍຂັ້ນແຂວງ; ປະສານສົມທົບໃນການພິຈາລະນາ ແລະ ຮັບຮອງການເລືອກຕັ້ງແທນສະມາຊິກສະພາປະຊາຊົນແຂວງປະຈຳເມືອງຕະໂອ້ຍ; ປະມວນປຶ້ມມະຕິກອງປະຊຸມສະໄຫມສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ທັງມະຕິອັນລວມ ແລະ ມະຕິສະເພາະ; ກະກຽມຂໍ້ມູນແຕ່ຫົວທີໃນການເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX; ກະກຽມສະເຫຼີມສະຫລອງວັນສ້າງຕັ້ງສະພາປະຊາຊົນແຂວງຄົບຮອບ 45 ປີ; ກະກຽມແຜນງົບປະມານຮັບໃຊ້ວຽກງານພາຍໃນສະພາປະຊາຊົນແຂວງໃຫ້ທັນການ; ຄະນະກຳມະການ, ຄະນະເລຂາທິການເປີດກອງປະຊຸມສ່ອງແສງລາຍງານປະຈຳເດືອນ ໃຫ້ເປັນປົກກະຕິໃນແຕ່ລະເດືອນ ຕາມກົດຫມາຍກຳນົດໄວ້.

(ນາງ ຄັດສອນ ຮຸ່ງສະຫວ່າງ)

# ຫາລືກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມ ແລກປ່ຽນບົດຮຽນ ລະຫວ່າງ ສພຂ 4 ແຂວງພາກໃຕ້



(ສພຊ) ກອງປະຊຸມປຶກສາຫາລືກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມແລກປ່ຽນບົດຮຽນ ລະຫວ່າງ ສພຂ 4 ແຂວງພາກໃຕ້ ໄດ້ຈັດຂຶ້ນໃນຕອນເຊົ້າວັນທີ 27 ເມສາ 2023 ທີ່ຫ້ອງປະຊຸມທາງໄກສະພາປະຊາຊົນແຂວງເຊກອງ (ກອງປະຊຸມເຊິ່ງໜ້າ) ໂດຍການເປັນປະທານຂອງທ່ານ ນາງ ຄຳໄພ ວິລະສານ ເລຂາທິການສະພາປະຊາຊົນແຂວງເຊກອງ, ມີບັນດາທ່ານເລຂາທິການ-ຮອງຫົວໜ້າເລຂາທິການ ພ້ອມດ້ວຍຫົວໜ້າ-ຮອງຫົວໜ້າຂະແໜງຄົ້ນຄວ້າ-ສັງລວມ ແລະ ຂໍ້ມູນຂ່າວສານ 4 ແຂວງພາກໃຕ້ (ຈຳປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື) ເຂົ້າຮ່ວມ.

ກອງປະຊຸມໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລືຫຼາຍບັນຫາ ກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມແລກປ່ຽນບົດຮຽນ ລະຫວ່າງ ສພຂ 4 ແຂວງພາກໃຕ້ ໂດຍສະເພາະດ້ານຮູບແບບ ແລະ ວິທີການ, ການກຳນົດດ້ານເນື້ອໃນທີ່ຈະແລກປ່ຽນຖອດຖອນບົດຮຽນຮ່ວມກັນ, ການກຳນົດດ້ານກິດຈະກຳ, ວັນ, ເວລາ ແລະ ເປົ້າໝາຍທີ່ຈະເຂົ້າຮ່ວມ.

ທັງນີ້, ກໍເພື່ອເປັນການຮັບປະກັນໃຫ້ແກ່ການກະກຽມຮອບດ້ານໃຫ້ແກ່ກອງປະຊຸມແລກປ່ຽນບົດຮຽນ ລະຫວ່າງ ສພຂ 4 ແຂວງ ພາກໃຕ້ (ຈຳປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື) ໃຫ້ໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ ແລະ ເປັນການແລກປ່ຽນຖອດຖອນບົດຮຽນເຊິ່ງກັນແລະກັນໃນການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານຂອງສະພາປະຊາຊົນແຂວງ 4 ແຂວງພາກໃຕ້ ໃນໄລຍະຜ່ານມາຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ເພື່ອນຳໄປເປັນບົດຮຽນຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າໃຫ້ເກີດດອກອອກຜົນດີຂຶ້ນກວ່າເກົ່າ.

ຜ່ານການຄົ້ນຄວ້າ ແລະ ປຶກສາຫາລື ໃນກອງປະຊຸມ ໄດ້ຕົກລົງເຫັນດີເປັນເອກະພາບກັນ ຄາດວ່າກອງປະຊຸມດັ່ງກ່າວ ຈະໄດ້ດຳເນີນໃນທ້າຍເດືອນສິງຫາ ຫາຕົ້ນເດືອນກັນຍາ 2023.

# ຕິດຕາມກວດກາການປະເມີນຜົນ ການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຂົງເຂດຍຸຕິທຳ




(ສພຊ) ສະພາປະຊາຊົນແຂວງໄຊສົມບູນ ໄດ້ຈັດກອງປະຊຸມຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຂົງເຂດຍຸຕິທຳ ໃນຕອນເຊົ້າຂອງວັນທີ 2 ພຶດສະພາ 2023 ຢູ່ທີ່ສະໂມສອນເມືອງອະນຸວົງ ໂດຍການເປັນປະທານຂອງທ່ານ ພັອ. ວິໄຊທໍ່ເພຍຫຼວງ ຈົ່ງເສີ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18 ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ ປະຈຳ 5 ເມືອງ ຕະຫຼອດຮອດບັນດາພະແນກການ, ອົງການ-ກົມກອງ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ພັອ. ວິໄຊທໍ່ເພຍຫຼວງ ຈົ່ງເສີ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ, ກອງປະຊຸມຄັ້ງນີ້ ແມ່ນຈະໄດ້ສຸມໃສ່ການຕິດຕາມກວດກາ ແລະ ຊຸກຍູ້ປະເມີນຜົນການຈັດຕັ້ງປະຕິບັດ ຂົງເຂດຍຸຕິທຳ ໃນຈຳນວນ 4 ສະບັບ ຄື ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ. ພ້ອມດຽວກັນນີ້, ທ່ານໄດ້ຮຽກຮ້ອງໃຫ້ບັນດາຜູ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ຈົ່ງພ້ອມກັນສຸມສະຕິປັນຍາຂອງຕົນ ໃນການຂຶ້ນລາຍງານ ແລະ ປະກອບຄຳຄິດ-ຄຳເຫັນຢ່າງກົງໄປມາ ດ້ວຍຄວາມຮັບຜິດຊອບສູງ. ທັງນີ້, ກໍເພື່ອເຮັດໃຫບັນດາເນື້ອໃນກົດໝາຍທັງ 4 ສະບັບ ໄດ້ຮັບການປັບປຸງຖືກຕາມຫຼັກການ,ລະບຽບການ ແລະ ມາດຕະການ ຂອງກົດໝາຍດັ່ງກ່າວ ໃຫ້ນັບມື້ນັບດີຂຶ້ນເລື້ອຍໆ.

ຈາກນັ້ນ, ທ່ານ ຈຸນດາ ຄຳບຸນມີ, ຫົວໜ້າອົງການໄອຍະການແຂວງ ແລະ ທ່ານ ຄຳເຜີດ ໄຊຍະຊ້າງ ຮອງປະທານສານປະຊົນ ແຂວງ ໄດ້ຜັດປ່ຽນກັນຂຶ້ນລາຍງານ ຜົນການປະເມີນການຈັດຕັ້ງກົດໝາຍບັນດາໜ້າວຽກຂອງຕົນ ໂດຍຍົກໃຫ້ເຫັນເຖິງຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ວິທີແກ້ໄຂ ໃນການປະຕິບັດ ສິດພາລະບົດບາດ ແລະ ໜ້າທີ່ໃນການຕິດຕາມກວດກາ ທົ່ວໄປຂອງກົດໝາຍ ໃຫ້ແກ່ທຸກອົງການຈັດຕັ້ງ ແລະ ທົ່ວສັງຄົມ ໄດ້ມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ. ພ້ອມນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ຜັດປ່ຽນກັນຂຶ້ນປະກອບຄຳຄິດ-ຄຳເຫັນ ຢ່າງພາວະວິໄສ ໃນການປະຕິບັດຂອງກົດໝາຍທັງ 4 ສະບັບ ດ້ວຍຄວາມຮັບຜິດຊອບສູງ ໃນການຈັດຕັ້ງການເຄື່ອນໄຫວ,ການຄຸ້ມຄອງ ແລະ ການຕິດຕາມ ກວດກາບັນດາກົດໝາຍແຕ່ລະສະບັບ ເພື່ອໃຫ້ຮັບປະກັນການປະຕິບັດໜ້າທີ່ກົດໝາຍໃຫ້ມີປະສິດທິພາບ, ປະສິດຕິຜົນ ແລະ ເຮັດໃຫ້ການດຳເນີນຄະດີຕ່າງໆ ເປັນຕົ້ນແມ່ນການພິຈາລະນາຕັດສິນ, ການພິພາກສາຄະດີ ແລະ ປະຕິບັດໜ້າທີ່ດ້ານອື່ນໆ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ່, ພາວະວິໄສ, ຖືກຕ້ອງ ແລະ ຍຸຕິທຳ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງບັນດາຄູ່ຄວາມ ແລະ ປະກອບເຮັດໃຫ້ສັງຄົມມີຄວາມສະຫງົບ, ເສດຖະກິດ-ສັງຄົມມີການຂະຫຍາຍຕົວ ຢ່າງຕໍ່ເນື່ອງ ແລະ ດີຂຶ້ນໃນເທື່ອລະກ້າວ.

(ແສງຕາວັນ ລັດຕະນະວົງ)




# ວິທີເຮັດວຽກ

**ພາກທີ 3**

**ພະຍາດເປັນແຕ່ປາກ (ຕໍ່)**

ໃບປິວຫຼາຍສະບັບ, ມະຕິຕົກລົງຫຼາຍອັນ, ຄຳຂວັນຫຼາຍອັນຂອງພັກເຮົາມີຈຸດປະສົງ ແລະ ຄວາມໝາຍອັນດີແທ້, ແຕ່ວ່າຂຽນດ້ວຍວິທີກວ້າງໄກ, ຊຸ່ນມົວ, ບໍ່ພຽງແຕ່ວ່າປະຊາຊົນບໍ່ເຂົ້າໃຈທໍ່ນັ້ນ ແຕ່ຕົວພະນັກງານເອງເບິ່ງບໍ່ເຂົ້າໃຈອີກດ້ວຍ. ແບບຢ່າງກໍຄື: ລະຫວ່າງມໍ່ໆນີ້ ພວກເຮົາ ຜ່ານໄປບ່ອນໃດກໍເຫັນຄຳຂວັນຕິດຢູ່ນຳຝາເຮືອນເວົ້າວ່າ:

- ຕ້ານການແຍກຕົວອອກໂດດດ່ຽວ, ຕ້ານໃນຕົວ, ຕ້ານທ້ອງຖິ່ນ.

ແຕ່ວ່າບາດຖາມເຂົ້າໄປຄັກແທ້ ຊໍ້າພັດມີແຕ່ 9 ສ່ວນ 10 ສ່ວນຂອງພະນັກງານຊັ້ນລຸ່ມບໍ່ເຂົ້າໃຈຫຍັງໝົດ ເຂົາເວົ້າວ່າ ຊັ້ນສູງບອກເອົາໄປຕິດກໍຕິດໄປຊັ້ນແລ້ວ, ແຕ່ວ່າຄວາມຈິງແທ້ ພວກເຂົາກໍບໍ່ເຂົ້າໃຈຫຍັງ. ບາງຄົນເວົ້າລົ້ງປາກແລ້ວເອົາໄປເວົ້າວ່າ: “ຕ້ານອາດຍາທ້ອງຖິ່ນ” ແນວນັ້ນກໍມີ.

ເປັນໜ້າເສຍດາຍທີ່ສຸດ ທີ່ຄຳຂວັນອັນດີໆຂອງພັກ ໄດ້ກາຍໄປເປັນເຄື່ອງຫຼິ້ນຂອງຄົນພານໄປລ້າງ ພວກເຮົາລອງຄິດເບິ່ງດູວ່າ ຄວາມຜິດນັ້ນເປັນຍ້ອນໃຜ? ບໍ່ແມ່ນເປັນນຳພະນັກງານຜູ້ຮັບຜິດຊອບນັ້ນບໍ່? ແລ້ວເພິ່ນຊໍ້າພັດເວົ້າຢູ່ເລື້ອຍໆວ່າ: ຕ້ອງໃຫ້ຖືກກັບຈິດໃຈຂອງປະຊາຊົນ ຖືກກັບລັກສະນະຂອງຊາດ, ແຕ່ວ່າເມື່ອໄປເຮັດແບບນັ້ນ ຈະໄປຖືກອີສັງ?.

ຄຳຂວັນຂອງພັກ ມັນແມ່ນຄວາມມຸ່ງມາດປາfຖະໜາ ແລະ ວັດຖຸປະສົງຂອງສະມາຊິກຕັ້ງແສນ ແລະ ປະຊາຊົນທັງລ້ານຄົນ ຢາກໃຫ້ມັນເປັນແນວນັ້ນ ກໍຕ້ອງເຮັດໃຫ້ປະຊາຊົນເຂົ້າໃຈວິທີເວົ້າຂອງປະຊາຊົນ ຖ້າບໍ່ເປັນແນວນັ້ນ ແມ່ນຈະເຮັດອອກເຖິງແສນຄຳຂວັນ ກໍບໍ່ມີປະໂຫຍດຫຍັງ?.

**ຍ) ພະຍາດມັກເວົ້າຄວາມສູງ:**

ຄວາມໃນພາສາເຮົາກໍບໍ່ມັກໃຊ້ ຊໍ້າໄປມັກໃຊ້ແຕ່ຄວາມໄທ; ຄວາມຝຣັ່ງ, ຄວາມປາລີ ແລະ ສັນສະກິດ: ການໃຊ້ຄວາມຕ່າງຊາດແນວນີ້ ແມ່ນວ່າໃຊ້ຖືກຄວາມໝາຍ ກໍມີຄວາມເສຍຫາຍຢູ່ແລ້ວ ເພາະວ່າປະຊາຊົນບໍ່ເຂົ້າໃຈ ຊໍ້າພັດຍັງມີຫຼາຍຄົນໃຊ້ຄວາມຕ່າງປະເທດເຫຼົ່ານັ້ນ ບໍ່ຖືກຕາມຄວາມຂອງມັນອີກຊໍ້າ.

ອ່ານຕໍ່ສະບັບໜ້າ...




# ກົດໝາຍ ວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ...

**ມາດຕາ 28 (ໃໝ່) ໜີ້ສິນຕ່າງປະເທດ**

ໜີ້ສິນຕ່າງປະເທດ ແມ່ນພັນທະທາງການເງິນທີ່ຜູ້ມີພູມລຳເນົາຢູ່ ສປປລາວ ສ້າງຂຶ້ນດ້ວຍການກູ້ຢືມ, ຄ້ຳປະກັນການກູ້ຢືມ, ຮັບສິນເຊື່ອການຄ້າຈາກຕ່າງປະເທດ, ອອກພັນທະບັດ ຫຼື ອອກຮຸ້ນກູ້ໃຫ້ຜູ້ບໍ່ມີພູມລຳເນົາ ຢູ່ ສປປລາວ ແລະ ເງິນຝາກຂອງຜູ້ບໍ່ມີພູມລຳເນົາ ຢູ່ ສປປລາວ.

ໜີ້ສິນຕ່າງປະເທດຂອງ ສປປລາວ ປະກອບດ້ວຍ:

1. ໜີ້ສິນຂອງພາກລັດ ຊຶ່ງແມ່ນໜີ້ສິນສາທາລະນະຕໍ່ຕ່າງປະເທດ;

2. ໜີ້ສິນຂອງສະຖາບັນການເງິນ ຊຶ່ງແມ່ນໜີ້ສິນຕໍ່ຕ່າງປະເທດຂອງທະນາຄານແຫ່ງ ສປປລາວ, ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຕາມການກຳນົດຂອງທະນາຄານແຫ່ງ ສປປລາວ;

3. ໜີ້ສິນຂອງພາກສ່ວນອື່ນ ຊຶ່ງແມ່ນໜີ້ສິນຕໍ່ຕ່າງປະເທດຂອງອົງການຈັດຕັ້ງສັງຄົມ, ບຸກຄົນ ແລະ ນິຕິບຸກຄົນ ທີ່ບໍ່ແມ່ນສະຖາບັນການເງິນ.

ທະນາຄານແຫ່ງ ສປປລາວ ສົມທົບກັບກະຊວງການເງິນ ແລະ ກະຊວງອື່ນທີ່ກ່ຽວຂ້ອງ ສັງລວມຂໍ້ມູນ ແລະ ຕິດຕາມສະພາບ ໜີ້ສິນຕໍ່ຕ່າງປະເທດຂອງ ສປປລາວ ພ້ອມທັງບັນຈຸເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ.

**ມາດຕາ 29 (ໃໝ່) ຍຸດທະສາດຄຸ້ມຄອງໜີ້ສິນຕ່າງປະເທດ**

ລັດຖະບານ ມອບໃຫ້ທະນາຄານແຫ່ງ ສປປລາວ ສົມທົບກັບກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອື່ນທີ່ກ່ຽວຂ້ອງ ຄົ້ນຄວ້າສ້າງຍຸດທະສາດຄຸ້ມຄອງໜີ້ສິນຕ່າງປະເທດ ເພື່ອສະເໜີສະພາແຫ່ງຊາດ ພິຈາລະນາຮັບຮອງ ແນໃສ່ຮັບປະກັນການຄຸ້ມຄອງນຳໃຊ້ໃຫ້ມີ ປະສິດທິພາບ ແລະ ປະສິດທິຜົນ ເຮັດໃຫ້ຖານະໜີ້ສິນຕ່າງປະເທດຂອງ ສປປລາວ ຢູ່ໃນລະດັບທີ່ສາມາດຄວບຄຸມໄດ້.

ຍຸດທະສາດຄຸ້ມຄອງໜີ້ສິນຕ່າງປະເທດ ຕ້ອງມີເນື້ອໃນດັ່ງນີ້:

1. ປະເມີນຖານະໜີ້ສິນຕ່າງປະເທດຂອງ ລັດຖະບານ, ສະຖາບັນການເງິນ ແລະ ພາກສ່ວນອື່ນທີ່ບໍ່ ແມ່ນລັດຖະບານ ແລະ ບໍ່ແມ່ນສະຖາບັນການເງິນ;

2. ກຳນົດທິດທາງລວມ ຄາດໝາຍສູ້ຊົນ ແລະ ຍຸດທະສາດ ໃນການຄຸ້ມຄອງໜີ້ສິນຕ່າງປະເທດ;

3. ກຳນົດອັດຕາສ່ວນໜີ້ສິນຕໍ່ຕ່າງປະເທດ ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ບໍ່ໃຫ້ເກີນມາດຕະຖານຄວາມປອດໄພດ້ານໜີ້ສິນ ແລະ ສອດຄ່ອງກັບລະດັບການຂະຫຍາຍຕົວຂອງເສດຖະກິດໃນແຕ່ລະໄລຍະ;

4. ກຳນົດວິທີການຈັດສັນໜີ້ສິນ ແລະ ແຜນບໍລິຫານສະພາບຄ່ອງໜີ້ສິນໃນແຕ່ລະໄລຍະ;

5. ກຳນົດມາດຕະການ ແລະ ກົນໄກການຈັດຕັ້ງປະຕິບັດ.

ທະນາຄານແຫ່ງ ສປປລາວ ມີໜ້າທີ່ສັງລວມສະຖິຕິໜີ້ສິນຕ່າງປະເທດໃຫ້ຄົບຖ້ວນ, ປະເມີນສະພາບ ໜີ້ສິນດັ່ງກ່າວ ແລະ ລາຍງານໃຫ້ລັດຖະບານ ໃນແຕ່ລະໄລຍະ ເປັນຕົ້ນ ສັນຍາໜີ້ສິນໃໝ່, ຍອດເຫຼືອໜີ້ສິນຕ່າງປະເທດ, ພັນທະຊຳລະໜີ້ສິນຕ່າງປະເທດປະຈຳປີ ແລະ ໂຄງປະກອບໜີ້ສິນ.

**ໝວດທີ 6**
**ການຝາກເງິນລະຫວ່າງປະເທດ**
**ແລະ ການນຳເງິນສົດເຂົ້າ-ອອກ ສປປລາວ**

**ມາດຕາ 30 (ໃໝ່) ການຝາກເງິນຂອງຜູ້ບໍ່ມີພູມລຳເນົາຢູ່ ສປປລາວ**

ຜູ້ບໍ່ມີພູມລຳເນົາ ຢູ່ ສປປລາວ ສາມາດຝາກເງິນເປັນສະກຸນເງິນກີບ ແລະ ເປັນເງິນຕາຕ່າງປະເທດ ນຳທະນາຄານທຸລະກິດຢູ່ ສປປລາວ ຕາມລະບຽບການຂອງທະນາຄານແຫ່ງ ສປປລາວ.

ທະນາຄານທຸລະກິດ ຕ້ອງຕິດຕາມ ແລະ ລາຍງານກ່ຽວກັບການຝາກເງິນຂອງຜູ້ບໍ່ມີພູມລຳເນົາ ຢູ່ ສປປລາວ ໃຫ້ທະນາຄານແຫ່ງ ສປປລາວ ຕາມລະບຽບການ.

**ມາດຕາ 31 (ປັບປຸງ) ການຝາກເງິນຢູ່ຕ່າງປະເທດຂອງຜູ້ມີພູມລຳເນົາ ຢູ່ ສປປລາວ**

ຜູ້ມີພູມລຳເນົາ ຢູ່ ສປປລາວ ສາມາດເປີດບັນຊີເງິນຝາກຂອງຕົນຢູ່ຕ່າງປະເທດ ຕາມການອະນຸຍາດຂອງທະນາຄານແຫ່ງ ສປປລາວ ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການດຳເນີນທຸລະກິດຂອງທະນາຄານທຸລະກິດ;

2. ການຮອງຮັບເງິນກູ້ ແລະ ຊຳລະເງິນກູ້ ລວມທັງສິນເຊື່ອການຄ້າ ກັບຕ່າງປະເທດ;

3. ການລົງທຶນຢູ່ຕ່າງປະເທດ, ການສ້າງຕັ້ງສາຂາ ຫຼື ຫ້ອງການຜູ້ຕາງໜ້າ ຢູ່ ຕ່າງປະເທດ ຕາມການອະນຸຍາດຂອງອົງການທີ່ກ່ຽວຂ້ອງ;

4. ເປົ້າໝາຍອື່ນ ຕາມລະບຽບການຂອງທະນາຄານແຫ່ງ ສປປລາວ.

ຜູ້ທີ່ມີເງິນຝາກຢູ່ຕ່າງປະເທດຕາມທີ່ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ ຕ້ອງລາຍງານການເຄື່ອນໄຫວບັນຊີເງິນຝາກດັ່ງກ່າວ ໃຫ້ທະນາຄານແຫ່ງ ສປປລາວ ຕາມລະບຽບການ.

ສຳລັບນັກສຶກສາ, ນັກການທູດ, ພະນັກງານ ທີ່ຖືກມອບໝາຍໃຫ້ໄປເຮັດວຽກ ແລະ ຜູ້ອອກແຮງງານ ຢູ່ຕ່າງປະເທດ ສາມາດເປີດບັນຊີເງິນຝາກຢູ່ຕ່າງປະເທດໂດຍບໍ່ຕ້ອງຂໍອະນຸຍາດນຳທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປລາວ ເປັນຜູ້ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບການນຳໃຊ້ບັນຊີເງິນຝາກຢູ່ຕ່າງປະເທດ.

**ມາດຕາ 32 ການນຳເງິນສົດເຂົ້າ-ອອກ ສປປລາວ**

ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປລາວ ສາມາດນຳເງິນຕາເປັນເງິນສົດເຂົ້າ ສປປລາວ ຕາມຈຳນວນທີ່ທະນາຄານແຫ່ງ ສປປລາວ ກຳນົດ, ຖ້າເກີນຈຳນວນດັ່ງກ່າວ ຕ້ອງແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ເພື່ອອອກເອກະສານຢັ້ງຢືນ.

ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປລາວ ສາມາດນຳເງິນຕາເປັນເງິນສົດອອກ ສປປລາວ ຕາມຈຳນວນທີ່ທະນາຄານແຫ່ງ ສປປລາວ ກຳນົດ, ຖ້າເກີນຈຳນວນດັ່ງກ່າວ ຕ້ອງຂໍອະນຸຍາດນຳທະນາຄານແຫ່ງ ສປປລາວ. ໃນກໍລະນີມີເອກະສານຢັ້ງຢືນກ່ຽວກັບການນຳເງິນຕາເຂົ້າ ສປປລາວ ສາມາດແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ເພື່ອນຳເງິນຕານັ້ນອອກ ສປປລາວ.

**ພາກທີ IV**
**ລະບອບອັດຕາແລກປ່ຽນ, ການບໍລິການເງິນຕາຕ່າງປະເທດ,**
**ຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ ແລະ ທຸລະກິດຄຳ**

**ມາດຕາ 33 (ປັບປຸງ) ລະບອບອັດຕາແລກປ່ຽນ**

ສປປລາວ ນຳໃຊ້ລະບອບອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ.

ທະນາຄານແຫ່ງ ສປປລາວ ກຳນົດອັດຕາແລກປ່ຽນອ້າງອີງບົນພື້ນຖານຄາດໝາຍມະຫາພາກດ້ານເງິນຕາ ໃນແຕ່ລະໄລຍະ.

ທະນາຄານແຫ່ງ ສປປລາວ ເປັນຜູ້ກຳນົດສະກຸນເງິນຕາຕ່າງປະເທດ ທີ່ສາມາດນຳໃຊ້ ແລະ/ຫຼື ຊື້-ຂາຍເງິນຕາ ຢູ່ ສປປລາວ ໃນແຕ່ລະໄລຍະ.

**ມາດຕາ 34 (ໃໝ່) ການບໍລິການເງິນຕາຕ່າງປະເທດ**

ການບໍລິການເງິນຕາຕ່າງປະເທດ ປະກອບດ້ວຍການບໍລິການ ໂອນເງິນຕາຕ່າງປະເທດ, ຮັບຝາກເງິນ ແລະ ສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ ແລະ ແລກປ່ຽນເງິນຕາ.

ຜູ້ໃຫ້ບໍລິການເງິນຕາຕ່າງປະເທດ ມີໜ້າທີ່ໂຄສະນາ, ຈັດຝຶກອົບຮົມ, ສຳມະນາ, ເຮັດການຕະຫຼາດ ກ່ຽວກັບການບໍລິການເງິນຕາຕ່າງປະເທດ ໂດຍຜ່ານຊ່ອງທາງຕ່າງໆ ລວມທັງສື່ສັງຄົມອອນລາຍ ໂດຍສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 35 (ໃໝ່) ການບໍລິການໂອນເງິນຕາຕ່າງປະເທດ**

ຜູ້ໃຫ້ບໍລິການຊຳລະທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປລາວ ເທົ່ານັ້ນ ທີ່ສາມາດໃຫ້ບໍລິການໂອນເງິນຕາຕ່າງປະເທດຢູ່ພາຍໃນ ແລະ ລະຫວ່າງປະເທດ. ທະນາຄານແຫ່ງ ສປປລາວ ເປັນຜູ້ກຳນົດລະບຽບການ ກ່ຽວກັບຂອບເຂດ ແລະ ເງື່ອນໄຂໃນການໂອນເງິນຕາຕ່າງປະເທດ.

**ມາດຕາ 36 (ໃໝ່) ການບໍລິການຮັບຝາກເງິນ ແລະ ສະໜອງສິນເຊື່ອ ເປັນເງິນຕາຕ່າງປະເທດ**

ທະນາຄານທຸລະກິດທີ່ຕັ້ງຢູ່ ສປປລາວ ເທົ່ານັ້ນ ທີ່ສາມາດຮັບຝາກເງິນ ແລະ ສະໜອງສິນເຊື່ອ ເປັນ ເງິນຕາຕ່າງປະເທດ. ຜະລິດຕະພັນເງິນຝາກເປັນເງິນຕາຕ່າງປະເທດ ປະກອບດ້ວຍ ບັນຊີເງິນຝາກກະແສລາຍວັນ, ເງິນຝາກປະຢັດ, ເງິນຝາກມີກຳນົດ ແລະ ຜະລິດຕະພັນເງິນຝາກອື່ນທີ່ມີ ຫຼື ບໍ່ມີດອກເບ້ຍ. ຜະລິດຕະພັນສິນເຊື່ອເປັນເງິນຕາຕ່າງປະເທດ ປະກອບດ້ວຍ ເງິນກູ້, ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ ແລະ ສິນເຊື່ອປະເພດອື່ນ ເພື່ອຊຸກຍູ້ການຜະລິດສິນຄ້າ ແລະ ການບໍລິການ ທີ່ສາມາດສ້າງລາຍຮັບເປັນເງິນຕາຕ່າງປະເທດ. ທະນາຄານແຫ່ງ ສປປລາວ ເປັນຜູ້ກຳນົດນະໂຍບາຍ ແລະ ລະບຽບການ ກ່ຽວກັບການຮັບຝາກເງິນ ແລະ ການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ ເປັນຕົ້ນ ສະກຸນເງິນຕາຕ່າງປະເທດ, ອັດຕາສ່ວນເງິນແຮຝາກບັງຄັບ, ອັດຕາດອກເບ້ຍ, ອັດຕາເບ້ຍປະກັນເງິນຝາກ ແລະ ວົງເງິນປົກປ້ອງ ໃນແຕ່ລະໄລຍະ.

**ມາດຕາ 37 (ໃໝ່) ການບໍລິການແລກປ່ຽນເງິນຕາ**

ທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປລາວ ເທົ່ານັ້ນ ທີ່ສາມາດໃຫ້ບໍລິການແລກປ່ຽນເງິນຕາ ຊຶ່ງຕ້ອງປະຕິບັດອັດຕາແລກປ່ຽນຕາມລະບຽບການຂອງທະນາຄານແຫ່ງ ສປປລາວ. ການແລກປ່ຽນເງິນຕາຕ່າງປະເທດຈາກສະກຸນໜຶ່ງໄປເປັນສະກຸນອື່ນ ຕ້ອງດຳເນີນຜ່ານການແລກປ່ຽນເປັນເງິນກີບເສຍກ່ອນ.

ທະນາຄານແຫ່ງ ສປປລາວ ເປັນຜູ້ກຳນົດ ນະໂຍບາຍ, ຫຼັກການ ແລະ ລະບຽບການ ລວມທັງຂອບເຂດການເຄື່ອນໄຫວກ່ຽວກັບການໃຫ້ບໍລິການແລກປ່ຽນເງິນຕາ.

**ມາດຕາ 38 (ໃໝ່) ຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ**

ຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ ປະກອບດ້ວຍ ຕະຫຼາດຊື້-ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ແລະ ຕະຫຼາດກູ້ຢືມເງິນຕາຕ່າງປະເທດລະຫວ່າງທະນາຄານ.

ຕະຫຼາດຊື້-ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ແມ່ນຕະຫຼາດທີ່ທະນາຄານທຸລະກິດດຳເນີນທຸລະກຳຊື້-ຂາຍ ເງິນຕາຕ່າງປະເທດດ້ວຍກັນ. ຜະລິດຕະພັນຂອງຕະຫຼາດດັ່ງກ່າວ ປະກອບດ້ວຍການຊື້-ຂາຍເງິນຕາຕ່າງປະເທດຮູບແບບທັນທີ ແລະ ອະນຸພັນທາງດ້ານການເງິນ ທີ່ເປັນເງິນຕາຕ່າງປະເທດ ເພື່ອປ້ອງກັນຄວາມສ່ຽງອັດຕາແລກປ່ຽນ ເປັນຕົ້ນການຊື້-ຂາຍ ຝາກເງິນຕາຕ່າງປະເທດ, ການຊື້-ຂາຍ ເງິນຕາຕ່າງປະເທດແບບລ່ວງໜ້າ ແລະ ສັນຍາສິດໃນການ ຊື້ ຂາຍ ເງິນຕາຕ່າງປະເທດ. ຜູ້ເຂົ້າຮ່ວມຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ ປະກອບດ້ວຍທະນາຄານທຸລະກິດ ແລະ ພາກສ່ວນອື່ນ ຕາມການອະນຸຍາດຂອງທະນາຄານແຫ່ງ ສປປລາວ.

ຕະຫຼາດກູ້ຢືມເງິນຕາຕ່າງປະເທດລະຫວ່າງທະນາຄານ ແມ່ນຕະຫຼາດທີ່ທະນາຄານທຸລະກິດດຳເນີນທຸລະກຳການຮັບຝາກ ແລະ ການກູ້ຢືມເງິນຕາຕ່າງປະເທດດ້ວຍກັນ ເພື່ອຈຸດປະສົງບໍລິຫານທຶນ ແລະ ສະພາບຄ່ອງເງິນຕາຕ່າງປະເທດຂອງຕົນ. ຜະລິດຕະພັນຂອງຕະຫຼາດດັ່ງກ່າວ ປະກອບດ້ວຍເງິນຝາກ ແລະ ເງິນກູ້ ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ເປັນເງິນຕາຕ່າງປະເທດ.

ທະນາຄານແຫ່ງ ສປປລາວ ເປັນຜູ້ກຳນົດລະບຽບການໃນການຄຸ້ມຄອງ ແລະ ຕິດຕາມກວດກາ ການເຄື່ອນໄຫວຕະຫຼາດດັ່ງກ່າວເປັນຕົ້ນສະກຸນເງິນຕາຕ່າງປະເທດ, ການລາຍງານທຸລະກຳ.

**ມາດຕາ 39 (ໃໝ່) ທຸລະກິດຄຳ**

ທຸລະກິດຄຳ ປະກອບດ້ວຍ ການນຳເຂົ້າ, ສົ່ງອອກ, ຊື້-ຂາຍ, ຮັບຝາກ, ໃຫ້ກູ້ ແລະ ຢັ້ງຢືນຄຸນນະພາບ ຂອງຄຳ.

ອ່ານຕໍ່ສະບັບໜ້າ...

## ແກ້ຄຳຜິດ

ໜັງສືພິມ "ຜູ້ແທນປະຊາຊົນ" ສະບັບ 920 ປະຈຳວັນທີ 28 ເມສາ-04 ພຶດສະພາ 2023 ໜ້າ 9 ຫົວຂໍ້ ທີ່ເພິ່ງທາງໃຈ ແມ່ນຜິດ, ຖືກແມ່ນ ທີ່ເພິ່ງທາງໃຈ; ຂໍໃຫ້ເຂົ້າໃຈຕາມນີ້ດ້ວຍ.

ຂໍອະໄພຢ່າງສູງໃນຄວາມຜິດພາດຄັ້ງນີ້ດ້ວຍ.

ບ.ກ




# ການລົງທຶນພັດທະນາຊີວິດ

# ດົ້ນກີບເມກ

ຜູ້ຂຽນເຂົ້າໃຈວ່າ: ອາດຍັງມີຫຼາຍຄົນຫຼົງທາງ ຫຼື ຖືເບົາຕໍ່ການພັດທະນາຊີວິດ-ຕໍ່ການລົງທຶນພັດທະນາຕົນໃຫ້ມີສັກກະຍະພາບດີຂຶ້ນ, ສ້າງໂຕເອງໃຫ້ກ້າວໜ້າເຂັ້ມແຂງຕາມທີ່ວາງແຜນໄວ້, ເປັນຫຍັງຈຶ່ງເວົ້າໄດ້ວ່າຄົນສ່ວນໜຶ່ງລະເລີຍຫຼົງທາງຊີວິດ ເພາະເຂົາມຸ່ງຫວັງລົງທຶນໃນດ້ານອື່ນ ເພື່ອສ້າງແຕ່ກຳໄລ ຄືເງິນຊັບສິນ ແຕ່ຂາດການສ້າງຊີວິດທີ່ເຂັ້ມແຂງດ້ານສຸຂະພາບ ແລະ ສະຕິປັນຍາ ຄື: ໂຕສະໝອງ; ຢ່າລືມຄິດວ່າທຸກຄົນທີ່ເກີດມາ ບໍ່ມີໃຜທີ່ສົມບູນແບບ ດັ່ງນັ້ນ, ເຮົາຕ້ອງລົງທຶນພັດທະນາຕົນເອງ.

ການລົງທຶນພັດທະນາຕົນດ້ານການຮັກສາສຸຂະພາບ ເປັນຫຍັງບາງຄົນຈຶ່ງຕ້ອງໄປກວດສຸຂະພາບປະຈຳທຸກປີ ເພື່ອກວດເບິ່ງສຸຂະພາບວ່າ: ຮ່າງກາຍມີການປ່ຽນແປງແບບໃດ; ມີພະຍາດຫຍັງເກີດຂຶ້ນແຊກຊ້ອນ, ຂະນະດຽວກັນເມື່ອເວົ້າເຖິງສຸຂະພາບ ກໍຕ້ອງເວົ້າເຖິງການບໍລິໂພກອາຫານ ແລະ ການອອກກຳລັງກາຍຄືກິລາ, ອາຫານທີ່ເຮົາກິນ ຍ່ອມສຳຄັນສູງສຸດໃນການສ້າງສຸຂະພາບຮ່າງກາຍໃຫ້ເຂັ້ມແຂງ ເພາະພວກເຮົາເຄີຍເຫັນບາງຄົນຫາເງິນໄດ້ຫຼາຍ ແຕ່ບໍ່ຍອມຈ່າຍຊື້ອາຫານດີຕໍ່ສຸຂະພາບມາກິນ ພຽງເພາະຢາກປະຢັດ ແລະ ເຂົ້າໃຈຕື້ນໆວ່າ ກິນແບບໃດທ້ອງກໍອີ່ມຄືກັນ ແຕ່ຢ່າລືມວ່າອາຫານທີ່ບໍ່ໄດ້ຄຸນນະພາບ ຍ່ອມຂາດສານວິຕາມິນໄປຫຼໍ່ລ້ຽງຮ່າງກາຍໃຫ້ພັດທະນາເຂັ້ມແຂງ ກົງກັນຂ້າມອາຫານບໍ່ດີອາດພາໃຫ້ຮ່າງກາຍເຈັບປ່ວຍຊຸດໂຊມ.

ການລົງທຶນໃສ່ການອອກກຳລັງກາຍເພື່ອຫຍັງ? ຄຳຕອບ ເພື່ອສ້າງຄວາມພ້ອມໃຫ້ຮ່າງກາຍມີສັກກະຍະພາບ, ປະສິດທິພາບຕໍ່ການເຮັດວຽກ, ຕໍ່ສູ້ກັບບັນຫາອຸປະສັກເກີດຂຶ້ນ ຢ່າລືມວ່າຄົນມີສະໝອງດີ ອາລົມແຈ່ມໃສ ຍ່ອມເກີດຈາກຮ່າງກາຍທີ່ແຂງແຮງ, ໂຕສຸດທ້າຍທີ່ຂາດບໍ່ໄດ້ໃນການລົງທຶນພັດທະນາຕົນເອງ ຄືການພັດທະນາສະໝອງ (ສະຕິປັນຍາ) ຄືການລົງທຶນໃສ່ການສຶກສາ.

ສັງລວມວ່າ: ການລົງທຶນສ້າງຊີວິດໃຫ້ເຂັ້ມແຂງທັງຮ່າງກາຍ; ຈິດໃຈ ແລະ ສະຕິປັນຍາ ຍ່ອມເປັນສິ່ງຄຽງຄູ່ກັນ ແລະ ສຳຄັນເທົ່າກັນ ຖ້າວ່າຄົນເຮົາມີແຕ່ຮ່າງກາຍເຂັ້ມແຂງ ແຕ່ສະໝອງໂງ່ຈ້າ ກໍພາໃຫ້ຊີວິດລົ້ມເຫຼວຍາກຈົນລົງໄດ້, ຢ່າລືມລົງທຶນໃສ່ຊີວິດນຳກັນເນີ!

# ບຸນວິສາຂະບູຊາ (ບຸນບັ້ງໄຟ)

# ໂດຍ: ນາງ ສີດາ

ເດືອນຫົກ ແມ່ນບຸນບັ້ງໄຟ ແລະ ບຸນວິສາຂະບູຊາ ທີ່ປະຊາຊົນລາວ ປະຕິບັດສືບທອດກັນມາ; ບຸນບັ້ງໄຟ ເປັນບຸນປະເພນີດັ້ງເດີມຂອງລາວ ແມ່ນພິທີບູຊາແຖນເພື່ອຂໍຄວາມຢູ່ເຢັນເປັນສຸກ, ຊຸ່ມເຢັນ, ຂໍນ້ຳຟ້ານ້ຳຝົນຈາກແຖນ ເພື່ອຈະມາທຳການເພີ່ມພູນຜະລິດຜົນ ເປັນບຸນປາງໃຫຍ່ ມີການເຊີ້ງ, ແຫ່ບັ້ງໄຟ, ຈູດບັ້ງໄຟເສັງກັນ, ຕີກອງຫາງ, ມັກເວົ້າ ແລະ ເຊີ້ງຄຳຜະ ພ້ອມທັງຫຼິ້ນເປື້ອນ ເຊັ່ນ: ເອົາຂີ້ຕົມທາໜ້າ ແລະ ຕົນໂຕ, ນຸ່ງເຄື່ອງຜິດເພດ... ໂດຍສະເພາະແມ່ນຊາຍໜຸ່ມ;

ການເຮັດບຸນບັ້ງໄຟໄດ້ມີນິທານ ຫຼື ເລື່ອງເລົ່າຕ່າງໆນາໆສະຫຼັບສັບຊ້ອນ ແລະ ກ່ຽວຂ້ອງກັນຫຼາຍຢ່າງ ການເຮັດບຸນບັ້ງໄຟນັ້ນ ຕາມຄວາມເຊື່ອທີ່ວ່າ ເທິງຟ້າມີສິ່ງສັກສິດ ຫຼື ມີຊາວພຸດເອີ້ນວ່າ "ພະຍາແຖນ" ເຊິ່ງຄວາມເປັນມາຂອງບຸນບັ້ງໄຟນັ້ນ ມີຜູ້ເຖົ້າຜູ້ແກ່ໄດ້ເລົ່າໃຫ້ຟັງວ່າ: ກາລະຄັ້ງໜຶ່ງນານມາແລ້ວ ບ້ານເມືອງເກີດເດືອດຮ້ອນ ເພາະຝົນຟ້າບໍ່ຕົກຕາມລະດູການບັນດາຄົນ, ສັດ, ພືດ...ຕ່າງໄດ້ຮັບຄວາມເດືອດຮ້ອນໄປຕາມໆກັນ ແລະ ໃນຕອນນັ້ນ, ຍັງມີພະຍາຄັນຄາກ ທີ່ມີອິດທິລິດ ເປັນສັດວິເສດ ປົກຄອງຢູ່ພື້ນດິນ ຈຶ່ງອອກໄປກວດກາຫາສາເຫດວ່າ ເປັນຫຍັງຝົນຟ້າຈຶ່ງບໍ່ຕົກລົງມາ ແລະ ກໍຮູ້ຄວາມຈິງວ່າ ເປັນຍ້ອນພະຍາແຖນບໍ່ສົ່ງຝົນລົງມາ; ພະຍາຄັນຄາກຮູ້ຢ່າງນັ້ນ, ຈຶ່ງຂໍອາສາສູ້ກັບພະຍາແຖນ ໂດຍເອົາຝົນຟ້າເປັນເດີມພັນ ຫາກພະຍາຄັນຄາກຊະນະພະຍາແຖນຕ້ອງເຮັດໃຫ້ຝົນຕົກລົງມາໃຫ້ຄົນ; ພະຍາແຖນ ແລະ ພະຍາຄັນຄາກຕໍ່ສູ້ກັນ ຜົນປkກົດວ່າ ພະຍາຄັນຄາກຊະນະ ພະຍາແຖນຕ້ອງສົ່ງຟ້າຝົນໃຫ້ຕົກລົງມາໃນໂລກມະນຸດ ແຕ່ມີຂໍ້ຕົກລົງວ່າ ຊາວໂລກຈະຕ້ອງເຮັດບຸນບັ້ງໄຟແລ້ວຈູດຂຶ້ນ ເພື່ອເປັນການບອກເຕືອນວ່າ ຕ້ອງການຝົນເມື່ອໃດ, ເວລາໃດ ແລະ ຍາມໃດ; ດັ່ງນັ້ນ, ເມື່ອເຖິງລະດູການເຮັດນາ ຊາວນາຕ້ອງການຝົນ ກໍຕ້ອງເຮັດບັ້ງໄຟເພື່ອຈູດບັ້ງໄຟຂຶ້ນເມືອບອກພະຍາແຖນ ເປັນສັນຍານໃຫ້ຮູ້ ເພື່ອໃຫ້ພະຍາແຖນເຮັດໃຫ້ຝົນຕົກລົງມາ ດ້ວຍເຫດຄວາມເຊື່ອທີ່ກ່າວມານີ້ ຈຶ່ງໄດ້ມີການເຮັດບຸນບັ້ງໄຟຈົນເຖິງປັດຈຸບັນນີ້.

ນອກຈາກບຸນບັ້ງໄຟແລ້ວ, ໃນເດືອນຫົກ ຍັງມີບຸນສຳຄັນທາງພຸດທະສາສະໜາຄືວັນວິສາຂະບູຊາ ຄຳວ່າ «ວິສາຂະ» ແປວ່າ ເດືອນຫົກເພັງ; ດັ່ງນັ້ນ, ການເຮັດບຸນວິສາຂະບູຊາ ເປັນການທຳບຸນສະຫຼອງວັນປະສູດ, ວັນຕັດສະຮູ້ ແລະ ວັນປະລິນິພານ ຂອງພະພຸດທະເຈົ້າໂຄຕະມະນັ້ນເອງ; ພະອົງໄດ້ປະສູດມື້ເພັງ ໃນເດືອນຫົກ ປີຈໍ ກ່ອນ ພ.ສ 80 ປີ, ຕັດສະຮູ້ເປັນພະພຸດທະເຈົ້າປີວອກ, ກ່ອນ ພ.ສ 45 ປີ ແລະ ປະລິນິພານ ປີມະເສັງ ພ.ສ ພຸດທະສັກກະລາດກໍ່ຕັ້ງ ປີທີ 1 ເຊິ່ງເປັນມື້ເພັງເດືອນຫົກນັ້ນເອງ;

ສະນັ້ນ, ເດືອນຫົກເພັງຂອງແຕ່ລະປີ ປະຊາຊົນລາວຜູ້ນັບຖືສາສະໜາພຸດ ຈຶ່ງເຮັດບຸນຕັກບາດຖວາຍທານ ແລະ ຟັງເທສະໜາ ເພື່ອລະລຶກເຖິງຄຸນພະພຸດທະເຈົ້າຕາມຮີດຄອງປະເພນີອັນດີງາມ.



# ຂຽນຄຳລາວໃຫ້ຖືກ

#ຄູແສງ

| ຄຳສຽງເດີມ | ຄຳປ່ຽນສຽງ |
|---|---|
| ອະມະຕະ | ອຳມະຕະ |
| ອະນາດ | ອຳນາດ |
| ປະຖະພີ | ປັດຖະພີ |
| ກະລະນີ | ກໍລະນີ |
| ກະລະກົດ | ກໍລະກົດ |
| ກະລິຍາ | ກິລິຍາ |
| ກະລະບູນ | ກາລະບູນ |
| ກາລະພຶກ | ກັນລະພຶກ |




# ສົງການ

ໃນຄຳວ່າ "ສົງການ" ໝາຍເຖິງ ນັກຂັດຕະລຶກ ໃນການຂຶ້ນປີໃໝ່ ຕາມຫລັກເກນສຸລິຍະຄະຕິຂອງລາວ ຄື : ວັນທີ 13-14-15 ເມສາ ເວລາທີ່ຕາເວັນໝູນວຽນຂຶ້ນສູ່ລາສີເມດ ເອີ້ນວ່າມະຫາສົງການ

ເມສາ ແປວ່າ ໝູ່ດາວ ປະຈຳລາສີທີ 1 ແມ່ນດາວຮູບແບ້ ຄືເດືອນ 5 ເອີ້ນວ່າ ເມດ ກໍມີ ດັ່ງຄຳວ່າ:

- ຂອບເມື່ອທໍລະນີເຕົ້າ ສະກຽນເນົາໃນເມດ (ໃນເລື່ອງສິນໄຊ)

ສັງຂານ ແມ່ນວັນຂຶ້ນປີໃໝ່

ສັງຂານ ແມ່ນຮ່າງກາຍ ຕົວຕົນຂອງຄົນ ແລະ ສັດ ສິ່ງທີ່ປະກອບສ້າງຂຶ້ນໃຫ້ເປັນຮ່າງກາຍ ແລະ ຈິດ.ໃຈ ເອີ້ນວ່າສັງຂານ ສັງຂານເປັນຂອງບໍ່ທ່ຽງ ມີ ເກີດ ແກ່ ເຈັບ ຕາຍ.

- ເທສະການ ແມ່ນເວລາສະໄໝ ຄາວທີ່ກຳນົດໄວ້ ເປັນປະເພນີເພື່ອທຳບຸນ ແລະ ການມ່ວນຊື່ນປະຈຳທ້ອງຖິ່ນ ຫຼື ປະຈຳຊາດເຊັ່ນ ບຸນປີໃໝ່ ບຸນເຂົ້າພັນສາ ບຸນຊ່ວງເຮືອ ບຸນບັ້ງໄຟ ແລະ ອື່ນໆ.

ໃນຄຳສັບທີ່ວ່າ "ສົງການ" ບໍ່ແມ່ນສັບພາສາລາວ ແຕ່ເປັນສັບພາສາສັນສະກິດ ພາສາຂອງຄົນອິນເດຍບູຮານ.



## ສຸກສະບາຍຫາຍໂລດ

# ແຫຼ່ງໂປຣຕີນສຳລັບຄົນທີ່ຫຼຸດນ້ຳໜັກ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ



"ໂປຣຕີນ" ເປັນສານອາຫານທີ່ມີກົດອະມິໂນທີ່ຈຳເປັນຕໍ່ຮ່າງກາຍ ມີໜ້າທີ່ໃນການສ້າງຄວາມເຂັ້ມແຂງ ແລະ ຊ່ວຍໃນການເຮັດວຽກຂອງກະດູກ, ກ້າມເນື້ອ ແລະ ຜິວໜັງ; ແຕ່ທ່ານຮູ້ບໍ່ວ່າ ຖ້າກິນທາດໂປຣຕີນໃນທາງທີ່ຖືກຕ້ອງ ຈະຊ່ວຍຫຼຸດນ້ຳໜັກ ແລະ ຫຼຸດປະລິມານໄຂມັນໄດ້; ຄໍລຳສຸກສະບາຍຫາຍໂລດສະບັບນີ້ ຈະພາທ່ານຜູ້ອ່ານ ມາຮູ້ຈັກແຫຼ່ງໂປຣຕີນທີ່ບໍ່ຄວນພາດເພື່ອຮັບປະທານ.

**1. ໄຂ່**

ໄຂ່ ອຸດົມໄປດ້ວຍສານອາຫານທີ່ມີຄຸນປະໂຫຍດ ແລະ ຍັງຊ່ວຍໃຫ້ທ່ານຮູ້ສຶກອີ່ມໄວຂຶ້ນ ແລະ ກິນອາຫານໜ້ອຍລົງ ເຊິ່ງມັນຈະຊ່ວຍຫຼຸດປະລິມານແຄລໍຣີທີ່ກິນໄດ້ ແຕ່ຖ້າຢ້ານວ່າແຄລໍຣີທີ່ມາຈາກໄຂ່ແດງຫຼາຍເກີນໄປ ສາມາດເລືອກຮັບປະທານແຕ່ໄຂ່ຂາວໄດ້.

**2. ປາແຊວມອນ**

ມີປະລິມານ "ໂປຣຕີນຫຼາຍ" ແລະ ສາມາດຍ່ອຍໄດ້ງ່າຍ ມີຄຸນປະໂຫຍດດ້ານສຸຂະພາບຫຼາຍເໝາະສຳລັບຄົນທີ່ຕ້ອງການຫຼຸດນ້ຳໜັກ.

**3. ເອິກໄກ່**

ມີໄຂມັນໜ້ອຍກ່ວາຊີ້ນສັດປະເພດອື່ນໆ ສຳລັບທ່ານທີ່ຕ້ອງການສ້າງກ້າມເນື້ອ ຫຼື ຕ້ອງການຫຼຸດນ້ຳໜັກ ຈະຕ້ອງຫຼຸດອາຫານທີ່ມີໄຂມັນສູງ ຄຽງຄູ່ກັບການກິນໂປຣຕີນ ແລະ ອອກກຳລັງກາຍດັ່ງນັ້ນ, ເອິກໄກ່ ຈຶ່ງເປັນອາຫານທີ່ດີທີ່ສຸດ ສຳລັບການການຫຼຸດນ້ຳໜັກ ແລະ ສ້າງກ້າມເນື້ອ.

**4.ໂຢເກີດ (ນົມສົ້ມ)**

ມີຈຸລິນຊີທີ່ເປັນປະໂຫຍດຫຼາຍ ຊ່ວຍໃນການຂັບຖ່າຍ ພ້ອມທັງມີໂປຣຕີນຫຼາຍ ແລະ ງ່າຍຕໍ່ການຊອກຊື້ ແລະ ລາຄາບໍ່ແພງ.

**5. ເນີຍໝາກຖົ່ວດິນ**

ອຸດົມໄປດ້ວຍໂປຣຕີນທີ່ຊ່ວຍໃນການເສີມສ້າງ ແລະ ບຳລຸງກ້າມເນື້ອທີ່ເສື່ອມໂຊມ; ນອກນັ້ນ, ຍັງອຸດົມໄປດ້ວຍໄຂມັນດີ ແຕ່ບໍ່ຄວນເອົາເນີຍຖົ່ວດິນມາກິນລ້າໆ ແລະ ຄວນຮັບປະທານເນີຍຖົ່ວດິນປະມານ 2 ບ່ວງຕໍ່ມື້ເທົ່ານັ້ນ.

**6. ນົມ**

ແຫຼ່ງໂປຣຕີນຈຳພວກນົມທີ່ມີໄຂມັນຕ່ຳ ເປັນທາງເລືອກທີ່ດີ ເມື່ອຕ້ອງການຫຼຸດນ້ຳໜັກ ເຊັ່ນ ນົມຖົ່ວເຫຼືອງ ຫຼື ນົມອາວມອນທີ່ມີແຄລໍຣີຕ່ຳ ເມື່ອທຽບກັບນົມງົວ ພ້ອມທັງມີສານອາຫານທີ່ຊ່ວຍບຳລຸງຜິວ ບໍ່ເຮັດໃຫ້ຜິວໜັງລອກ ລວມທັງຊ່ວຍຕ້ານຮອຍຫ່ຽວກ່ອນໄວອັນຄວນ.

**7. ເຕົ້າຫູ້**

ທ່ານຮູ້ບໍວ່າ ເຕົ້າຫູ້ໜຶ່ງກ້ອນ ໃຫ້ທາດໂປຣຕີນ ບໍ່ໜ້ອຍກວ່າຊີ້ນ ຈຶ່ງບໍ່ແມ່ນເລື່ອງແປກ ທີ່ຄົນກິນອາຫານເຈ ມັກຫັນມາຮັບປະທານເຕົ້າຫູ້ເປັນແຫຼ່ງໂປຣຕີນຫຼັກ ເພາະເຕົ້າຫູ້ຜະລິດຈາກຖົ່ວເຫຼືອງ ເຊິ່ງມີທາດໂປຣຕີນທີ່ອຸດົມສົມບູນ ຈຶ່ງສາມາດຮັບປະທານໄດ້ຢ່າງສະບາຍໃຈ.

ສະຫຼຸບລວມແລ້ວ ການຫຼຸດນ້ຳໜັກບໍ່ຄວນອົດອາຫານ ພຽງແຕ່ດັດແປງເມນູສຳລັບຮ່າງກາຍ ເພື່ອໃຫ້ຮ່າງກາຍໄດ້ຮັບສານອາຫານທີ່ເໝາະສົມກັບຮ່າງກາຍ ໂດຍສະເພາະແມ່ນໂປຣຕີນ ແລະ ສິ່ງທີ່ສຳຄັນ ແມ່ນຈະເຮັດໃຫ້ມີຄວາມສຸກ ກັບການຫຼຸດນ້ຳໜັກອີກດ້ວຍ.

**www.thairath.co.th**

## ອາດ ກະວີລາວ

## ຫຼົ້ນເສັ້ນ

**# ໂດຍ: ໂອທອງ ຄຳອິນຊູ**

✻ ຫຼາຍຄົນຈາວ່າເວົ້າ ໄປທົ່ວທັງນະຄອນ
ບອກວ່າ ມີບາງຄົນ ຢູ່ແດນດິນພົ້ນ
ຫຼິ້ນເສັ້ນ ໂຈເຈເວົ້າ ຈາກັນດັງສະໜັ່ນ
ຈັກເສັ້ນຫຍັງບໍ່ຮູ້ ໃຜຫຼິ້ນຢູ່ໃສ

✻ ແຕ່ວ່າ ເຮືອນມໍ່ຂ້ອຍ ຕາມທີ່ຮຽນເຫັນ
ລາວນັ້ນເປັນຄົນລວຍ ກວ່າຊຸມຊາວບ້ານ
ເຂົາວ່າ ລາວມີເສັ້ນ ມີສາຍຂາຍສິ່ງ
ຂ້ອຍກໍເລີຍຢາກຮູ້ ຊອມສິ້ງສ່ອງຫາ

✻ ແນມໄປເຫັນໂຈ່ງແຈ້ງ ລາວຢູ່ເຮືອນຄົວ
ລາວອາດ ເປັນຄືເຂົາ ກ່າວຈາກັນແທ້
ຂ້ອຍເຫັນລາວພວມໃຊ້ ສອງມືບາຍບີບ
ແກວ່ງເສັ້ນລົງໃສ່ນ້ຳ ໃນໝໍ້ຢູ່ເຕົາ

✻ ພໍເສັ້ນຟູໂຜ່ຂຶ້ນ ລາວຮີບຊອນຕັກ
ແລ້ວຈຶ່ງເອົາມາວາງ ແບ່ງເປັນຫົວນ້ອຍ
ເອົາໃສ່ລົງໃນເຂ້ງ ອັນສານໂດຍຕອກ
ລໍຄົນມາແວ່ຊື້ ຊຸມເສັ້ນຈຶ່ງຂາຍ

✻ ສ່ວນຂ້ອຍ ມີແຕ່ເສັ້ນ ຂອງໝີ່ຍຳຍຳ
ຫຼິ້ນບໍ່ເປັນຄືເຂົາ ດອກແນວຊຸມເສັ້ນ
ແຕ່ວ່າ ຄັນຫິວເຂົ້າ ຍັງພໍມີໝີ່
ອາໄສກິນແຕ່ເສັ້ນ ຍາມຄ້ານແຕ່ງກິນ ນີ້ແລ້ວ.!

## ພັກຜາຍ ລະບາຍ



*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

✻ ***1 ພຶດສະພາ*** *ວັນກຳມະກອນຜ່ານພົ້ນໄປ ເປັນແນວໃດພີ່ນ້ອງ* ***ທ່ອງທ່ຽວ-ກິດຈະກຳ*** *ພັກຍືດຍາວຫຼາຍວັນ ຕິດຕໍ່ກັບຊົດເຊີຍຫຼິ້ນ ມີຄວາມສຸກສົມແນ້ງ ມະໂບໄບຫາຍເມື່ອຍບໍ່,* ***ປ່ຽນ ພ.ສ 5 ພຶດສະພາ****ເພີ່ນເອົ້າ* ***2566*** *ຍ່າງກ້າວ* ***ສະຖຽນຕັ້ງ****ສະຫງ່າງາມ* ***ທ່ານເອີຍ!***

## ຊອບຍິ້ມ

**# ແອ່ບຕຸ້ງ**

**ພາງເກີບບັບຍາຍ**

ທ້າວປິຕິ ນັກຮຽນຫ້ອງ ມ2 ຖາມເອື້ອຍຄູວ່າ: ຫຼັງຈາກເລີກຮຽນແລ້ວ ລົມນຳໄດ້ບໍ່? ເອື້ອຍຄູຮັບປາກວ່າໄດ້. ຫຼັງເລີກຮຽນ ຄູກໍເອີ້ນທ້າວປິຕິມາຫາ ແລ້ວຖາມວ່າ:

**ເອື້ອຍຄູ:** ລົມໄດ້ບາດນີ້ ນ້ອງມີຫຍັງບໍ່?

**ປິຕິ:** ນ້ອງຄິດວ່າ ຄ້າສົມທຽບໃສ່ໝູ່ໃນຫ້ອງນີ້ ນ້ອງສະຫຼາດໂພດ. ເວລາຮຽນກໍຮູ້ສຶກລ່າຄານ, ນ້ອງຢາກຂຶ້ນໄປຮຽນຢູ່ ຊັ້ນ ມ7 ໂລດໄດ້ບໍ່?

ເອື້ອຍຄູນຳເອົາເລື່ອງນີ້ໄປລົມນຳອຳນວຍການ, ແລ້ວນັດ ທ້າວປິຕິ ໄປທົດສອບຄວາມສະຫຼາດ ເຊິ່ງມີນັບດາຄູອາຈານເຂົ້າຮ່ວມສຳພາດນຳ.

**ທ່ານອຳນວຍການ:** 36 ຄູນ 49 ອອກເທົ່າໃດ?

**ປິຕິ:** 1.764

**ທ່ານອຳນວຍການ:** 363 ຄູນ 363 ອອກເທົ່າໃດ?

**ປິຕິ:** 131.769

ການທົດສອບດຳເນີນມາເຖິງຊໍ່ວໂມງທ້າວປິຕິ ບໍ່ຄາລັກຄຳຖາມ, ທ່ານອຳນວຍການເລີຍບອກໃຫ້ເອື້ອຍຄູສຳພາດ.

\+ ງົວມີ 4 ແລະ ເອື້ອຍມີ 2 ແມ່ນຫຍັງ?

ຂາ

\+ ຢູ່ເສື້ອເອື້ອຍ ແລະ ໂສ້ງນ້ອງມີຫຍັງ?

\- ຖົງ

\+ ຢູ່ບ່ອນໃດແມ່ຍິງມີຂົນກູດຫຼາຍແລ້ວແຊງ?

\- ຊີຫາເລັບ

\+ ແມ່ນຫຍັງຢູ່ກາງຂາ

\- ຫົວເຂົ່າ

\+ ຕອນຜູ້ຍິງໂສດມັນແຄບ ບາດເອົາຜົວແລ້ວກວ້າງ ແມ່ນຫຍັງ?

\- ຕຽງ

\+ ສ່ວນໃດຂອງຮ່າງກາຍເຮົາປຽກຢູ່ຕະຫຼອດ?

\- ລີ້ນ

\+ ແມ່ນຫຍັງຊຽບຂຶ້ນຕົ້ນດ້ອຍຕົວ ຫ ບາງຄັ້ງແຫ້ງ ແລະ ບາງຄັ້ງມີນ້ຳ?

\- ຫ້ອຍ

ພໍຮອດຄຳຖາມນີ້ ອຳນວຍການທີ່ກຳລັງເຫື່ອແຕກບໍ່ຄຳຖາມ ເອື້ອຍຄູຮອດຂຶ້ນວ່າ:

**ອຳນວຍການ:** ສົ່ງລາວໄປຮຽນດົງໂດກເລີຍຊາ, ຂ້ອຍເອງຍັງຕອບບໍ່ໄດ້ ອັນຄຳຖາມຍາກໆແບບນີ້.

## ຄະຕິເຕືອນໃຈ

**# ດອກສະຍອມ**

ເຫັນວ່າປາກບົກນ້ອຍ ຢ່າຟ້າວຢຽວລົງແຮງຫຼາຍເນີ
ບາດບົກໂຮມແຮງກັນ ຊີຕອດຕາຍໂຕຊ້າງ




# ເຂີນ – ອາຍ

'ເຂີນ' ແລະ 'ອາຍ' ເປັນສອງຄຳທີ່ສາມາດເປັນຫຼາຍປະເພດຄຳ ເຊິ່ງມີຄວາມໝາຍຄື ແລະ ຕ່າງກັນ ດັ່ງນີ້:

'ເຂີນ' ຖ້າເປັນຄຳນາມ ກໍໝາຍເຖິງ ຊື່ຂອງຄົນເຜົ່າໜຶ່ງທາງລັດຊານ ປະເທດມຽນມາ ເອີ້ນ ໄທເຂີນ.

'ເຂີນ' ຖ້າເປັນຄຳວິເສດ ກໍມີຫຼາຍຄວາມໝາຍ ເປັນຕົ້ນວ່າ ເຂີນ ທີ່ໝາຍເຖິງ "ແຫ້ງ, ບົກລົງ" ເຊັ່ນ

- ໜອງທີ່ພວມຈະແຫ້ງ ເອີ້ນ ໜອງເຂີນນໍ້າ.
- ໃນຜະຫຍາ ມີບົດໜຶ່ງເວົ້າວ່າ "ຮຽມນີ້ ເປັນດັ່ງປາເຂັງຂ້ອນ ໃນໜອງນານໍ້າເຂີນຂາດ"

'ເຂີນ' ຍັງໝາຍເຖິງ "ຜົ້ນລື່ນຂຶ້ນ ຫຼື ລື່ນອອກຈາກໜ້າຂອງສິ່ງໃດໜຶ່ງ" ເຊັ່ນ

- ຫຼັກໄມ້ເຂີນໜ້ານໍ້າ
- ແມ່ຍິງບາງຄົນມັກນຸ່ງສິ້ນເຂີນ.

'ເຂີນ' ລາງເທື່ອກໍໝາຍເຖິງ "ຂາດ" ເຊັ່ນ ຄົນທີ່ບໍ່ມີພໍ່ຢູ່ພໍ່ກິນ ເອີ້ນວ່າ ຄົນຂາດເຂີນ.

'ເຂີນ' ຍັງໝາຍເຖິງ "ບໍ່ສຳຜັດກັນ" ເຊັ່ນ

- ເວລາແຕ່ງກອນ ກອນບໍ່ສຳຜັດກັນ ເພິ່ນກໍເອີ້ນວ່າ ກອນເຂີນ.

'ເຂີນ' ຖ້າເປັນຄຳກິລິຍາ ກໍມີຄວາມໝາຍວ່າ "ວາງໂຕບໍ່ຖືກ, ຮູ້ສຶກສີຢາກອາຍ" ເຊັ່ນ

- ເມື່ອຖືກເອີ້ນຊື່ຂຶ້ນໄປຮ້ອງເພງ ເຂົາກໍຮູ້ສຶກເປັນສີເຂີນໆວາດໃດວາດໜຶ່ງ.




ທ່ານເອີຍ ກ່ອນຈະກ້າວໜ້າເປັນນາຍຄົນມັນບໍ່ແມ່ນເລື່ອງງ່າຍ ກ່ອນຈະຕັດສິນບັນຫາໃດໜຶ່ງ ຄວນສືບຫາສາເຫດກ່ອນ ຖ້າຜິດພາດໄປແລ້ວ ຈະເສຍທັງສັກສີ ແລະ ຄວາມເຊື່ອຖືໄປຕະຫລອດການ







# ຈີນ ຕອບຄຳຖາມກ່ຽວກັບການປັບປຸງລັດຖະທຳມະນູນສະບັບໃໝ່ຂອງອຸສເບກິສະຖານ

ໃນວັນທີ 2 ພຶດສະພານີ້ ໄດ້ມີລາຍງານຂ່າວວ່າ, ໂຄສົກກະຊວງການຕ່າງປະເທດຈີນ ໄດ້ຕອບຄຳຖາມຂອງສື່ມວນຊົນ ກ່ຽວກັບການລົງປະຊາມະຕິປັບປຸງລັດຖະທຳມະນູນສະບັບໃໝ່ຂອງປະເທດອຸສເບກິສະຖານ ເຊິ່ງນັກຂ່າວໄດ້ຖາມວ່າ: ຫວ່າງມໍ່ໆມານີ້, ປະເທດອຸສເບກິສະຖານ ໄດ້ຈັດການລົງປະຊາມະຕິປັບປຸງລັດຖະທຳມະນູນສະບັບໃໝ່ຢ່າງສຳເລັດຜົນ, ອີງຕາມຜົນການນັບຄະແນນສຽງໃນເບື້ອງຕົ້ນສະແດງໃຫ້ເຫັນວ່າ ລັດຖະທຳມະນູນສະບັບປັບປຸງຖືກຮັບຮອງຢ່າງສຳເລັດຜົນ, ຝ່າຍຈີນຕີລາຄາແນວໃດຕໍ່ເລື່ອງນີ້?.



ໂຄສົກກະຊວງການຕ່າງປະເທດຈີນ ກ່າວວ່າ: ຝ່າຍຈີນສະແດງຄວາມຊົມເຊີຍຕໍ່ອຸສເບກິສະຖານ ທີ່ໄດ້ຈັດການລົງປະຊາມະຕິປັບປຸງລັດຖະທຳມະນູນສະບັບໃໝ່ຢ່າງສຳເລັດຜົນ ທັງເຊື່ອໝັ້ນວ່າ ພາຍໃຕ້ການນຳພາຂອງທ່ານ ຊາບກັດ ເມີຊີໂຢເຢັຟ ປະທານາທິບໍດີອຸສເບກິສະຖານ, ພາລະກິດຕ່າງໆໃນການປະຕິຮູບ ແລະ ການພັດທະນາຂອງປະຊາຊົນອຸສເບກິສະຖານ ຈະໄດ້ຮັບໝາກຜົນອັນໃຫຍ່ຫຼວງກວ່າເກົ່າຢ່າງແນ່ນອນ. ໃນຖານະທີ່ເປັນປະເທດເພື່ອນມິດຖານບ້ານໃກ້ເຮືອນຄຽງ ກໍຄືຄູ່ຮ່ວມຍຸດທະສາດຮອບດ້ານ, ຝ່າຍຈີນໃຫ້ຄວາມສຳຄັນສູງຕໍ່ສາຍພົວພັນລະຫວ່າງຈີນ-ອຸສເບກິສະຖານ, ຍິນດີພະຍາຍາມຮ່ວມກັບຝ່າຍອຸສເບກິສະຖານ, ສືບຕໍ່ລົງເລິກການຮ່ວມມືແບບຕ່າງຝ່າຍຕ່າງມີຜົນປະໂຫຍດໃນຂົງເຂດຕ່າງໆ, ຊຸກຍູ້ການສ້າງຄູ່ຮ່ວມຊາຕາກຳຈີນ-ອຸສເບກິສະຖານ ໃຫ້ໄດ້ຮັບໝາກຜົນອັນໃໝ່ເລື້ອຍໆ.

# ຮົງກົງ ເພີ່ມອັດຕາຄ່າແຮງງານຂັ້ນຕໍ່າ 1 ຊົ່ວໂມງເປັນ 40 ໂດລາຮົງກົງ

*ເຂດບໍລິຫານພິເສດຮົງກົງຂອງຈີນເພີ່ມອັດຕາຄ່າແຮງງານຂັ້ນຕໍ່າຕາມກົດໝາຍເປັນ 40 ໂດລາຮົງກົງຕໍ່ຊົ່ວໂມງ ມີຜົນບັງຄັບໃຊ້ນັບແຕ່ວັນທີ 1 ພຶດສະພາຜ່ານມາ.*



ອີງຕາມລາຍງານວັນທີ 3 ພຶດສະພາຜ່ານມາ ໃຫ້ຮູ້ວ່າ: ຄະນະຜູ້ບໍລິຫານຮົງກົງມີມະຕິເຫັນດີຕາມການແນະນຳຈາກຄະນະກຳມະການຄ່າແຮງງານຂັ້ນຕໍ່າ ໃຫ້ປັບອັດຕາຄ່າແຮງງານຂັ້ນຕໍ່າຕາມກົດໝາຍຈາກ 37,5 ໂດລາຮົງກົງຕໍ່ຊົ່ວໂມງ ເປັນ 40 ໂດລາຮົງກົງຕໍ່ຊົ່ວໂມງ ເພີ່ມຂຶ້ນ 6,7%.

ກົດໝາຍຄ່າແຮງງານຂັ້ນຕໍ່າລະບຸວ່າ: ພະນັກງານຈະໄດ້ຮັບການຄຸ້ມຄອງພາຍໃຕ້ອັດຕາຄ່າແຮງງານໃໝ່ ເຊິ່ງຄອບຄຸມອັດຕາຄ່າແຮງງານປະຈຳເດືອນ, ປະຈຳວັນ, ປະຈຳຊົ່ວໂມງ, ປະຈຳແຕ່ລະອັນ, ແບບຖາວອນ, ແບບຊົ່ວຄາວ, ແບບວຽກປະຈຳ ຫຼື ແບບວຽກນອກເວລາ ໂດຍບໍ່ຄຳນຶງວ່າຈະຖືກຈ້າງພາຍໃຕ້ສັນຍາຕໍ່ເນື່ອງ ຕາມກຳນົດໃນກົດໝາຍວ່າດ້ວຍການຈ້າງວຽກ ຫຼື ບໍ່.

ເຖິງຢ່າງໃດກໍຕາມ, ອັດຕາຄ່າແຮງງານໃໝ່ຈະບໍ່ມີຜົນບັງຄັບໃຊ້ສະເພາະແຮງງານເຮັດວຽກຢູ່ເຮືອນ, ນັກສຶກສາຝຶກງານ ແລະ ນັກສຶກສາທີ່ຫາປະສົບການເຮັດວຽກ.

# ອິດສະຕຣາເອີ ປະກາດກວາດລ້າງການສູບຢາໄຟຟ້າ

ອີງຕາມການລາຍງານຂ່າວໃນວັນທີ 2 ພຶດສະພາ 2023 ໃຫ້ຮູ້ວ່າ: ທ່ານ ມາກ ບັດເລີຣ ລັດຖະມົນຕີກະຊວງສາທາລະນະສຸກອິດສະຕຣາເອີ ໄດ້ປະກາດກວາດລ້າງການສູບຢາໄຟຟ້າ ເຊິ່ງການສູບຢາໄຟຟ້າ ໄດ້ກາຍປັນບັນຫາຕົ້ນຕໍອັນດັບ 1 ໃນໂຮງຮຽນມັດທະຍົມສຶກສາ ແລະ ພວມແຜ່ ຂະຫຍາຍໃນບັນດາໂຮງຮຽນປະຖົມສຶກສາ, ໃນຂະນະທີ່ບໍລິສັດຢາສູບໄດ້ອອກຜະລິດຕະພັນຢາສູບຊະນິດໃໝ່ ທີ່ມີສີສັນໂດດເດັ່ນ ແລະ ເພີ່ມກິ່ນດຶງດູດໃຈ ເພື່ອສ້າງໃຫ້ຜູ້ເສບຕິດນິໂຄຕິນ ລຸ້ນໃໝ່ຄືກັບການເຄີຍສູບຢາມາກ່ອນ.



ຢາສູບໄຟຟ້າ ຈຳໜ່າຍໃຫ້ແກ່ລັດຖະບານ ແລະ ຊຸມຊົນທົ່ວໂລກ ໃນຖານະຜະລິດຕະພັນເພື່ອປິ່ນປົວພະຍາດທີ່ໃຊ້ຊ່ວຍໃນການຢຸດເຊົາສູບຢາສຳລັບຜູ້ສູບຢາເປັນເວລາດົນນານ, ແຕ່ບໍ່ແມ່ນຜະລິດຕະພັນສຳລັບເດັກນ້ອຍ. ໃນຂະນະດຽວກັນ, ອິດສະຕຣາເອີ ໄດ້ອອກມາດຕະການໃໝ່ ເພື່ອຕໍ່ຕ້ານການສູບຢາຄັ້ງໃຫຍ່ທີ່ສຸດໃນຮອບທົດສະວັດຂອງອິດສະຕຣາເອີ, ໂດຍຈະຫ້າມການຈຳໜ່າຍຢາສູບໄຟຟ້າແບບໃຊ້ຄັ້ງດຽວແລ້ວຖິ້ມ, ຢຸດຕິການນຳເຂົ້າຢາສູບໄຟຟ້າທີ່ບໍ່ມີໃບສັ່ງຈາກແພດໝໍ ແລະ ຈຳກັດປະລິມານ ນິໂຄຕິນ ໃນຢາສູບໄຟຟ້າອື່ນໆ.

ນອກນັ້ນ, ສະຖາບັນສຸຂະພາບ ແລະ ສະຫວັດດີການອິດສະຕຣາເອີ ຍັງລະບຸວ່າ ອິດສະຕຣາເອີ ມີອັດຕາການສູບຢາ ລາຍວັນຕໍ່າສຸດໃນໂລກ ແຕ່ກວດພົບວ່າໄວໜຸ່ມທີ່ມີອາຍຸຕໍ່າກວ່າ 25 ສູບຢາເພີ່ມສູງຂຶ້ນ.

## ເຝົ້າໄວ້ ໄດ້ບົດຮຽນ

ວິເສດ ສະແຫວງສຶກສາ

# ຢ່າປ່ອຍໃຫ້ເດັກເສບຕິດຢາພິດລາກໜ້າໃໝ່

ສຳລັບບົດນີ້ ສິ່ງທີ່ຢາກໃຫ້ອ່ານແລ້ວໄດ້ທັງບົດຮຽນ ພ້ອມນັ້ນ ແມ່ນເລື່ອງກ່ຽວກັບການປ້ອງກັນບໍ່ໃຫ້ເດັກໆໄດ້ຮັບຜົນກະທົບທາງລົບຈາກອິດທິພົນຂອງຍຸກໄອທີ-ຍຸກທີ່ສື່ສັງຄົມອອນລາຍ ໄດ້ກາຍເປັນປັດໄຈສຳຄັນໃນວິຖີຊີວິດຂອງຄົນເຮົາໃນປັດຈຸບັນ ຈົນມີບາງຄົນເອີ້ນມັນວ່າເປັນປັດໄຈທີ 5 (ແຕ່ກ່ອນມີແຕ່ປັດໄຈ 4 ຄື ອາຫານ, ເຄື່ອງນຸ່ງຖື, ເຮືອນຢູ່ ແລະ ຢາປິ່ນປົວພະຍາດ). ແຕ່ປັດໄຈທີ 5 ນີ້ ມັນມີທັງດ້ານບວກ ແລະ ດ້ານລົບປົນເປກັນຈົນແຍກເກືອບບໍ່ອອກ. ສຳລັບຄົນໃນໄວເດັກທີ່ຍັງໄຮ້ດຽງສານັ້ນ ຍິ່ງເປັນການຍາກທີ່ຈະຈຳແນກແຍກພູດວ່າອັນໃດຄວນ ຫຼື ບໍ່ຄວນບໍລິໂພກ ດັ່ງນັ້ນ ຈຶ່ງຈຳເປັນຕ້ອງມີມາດຕະການທາງກົດໝາຍ ຫຼື ລະບຽບການສະເພາະ ເພື່ອປ້ອງກັນໄວ້ແຕ່ຫົວທີ ບໍ່ໃຫ້ຄົນໃນໄວນີ້ ຕົກເປັນເຫຍື່ອຂອງສິ່ງບໍ່ດີຈາກໜ້າຈໍເຊັ່ນ ຮູບພາບ ຫຼື ເນື້ອໃນລາມົກອານາຈານ, ເລື່ອງການໃຊ້ຄວາມຮຸນແຮງ ດັ່ງນີ້ເປັນຕົ້ນ. ເມື່ອປະມານ 6 ປີຍ້ອນຫຼັງ ທາງການຂອງຍີ່ປຸ່ນ ແລະ ສ.ເກົາຫຼີ ໄດ້ປະກາດໃຊ້ກົດລະບຽບທີ່ກຳນົດເວລາສະເພາະໃຫ້ເດັກອາຍຸຕ່ຳກວ່າ 17 ປີ ສາມາດເຂົ້າເຖິງສື່ສັງຄົມອອນລາຍ ໂດຍສະເພາະແມ່ນເກມອອນລາຍ. ຕໍ່ມາກໍມີຂ່າວຈາກປະເທດມາເລເຊຍວ່າທາງການຂອງປະເທດນີ້ໄດ້ສັ່ງຢຸດການໃຫ້ບໍລິການອິນເຕີເນັດສຳລັບຜູ້ທີ່ມີອາຍຸຕ່ຳກວ່າ 17 ປີ ນັບແຕ່ທ່ຽງຄືນຫາ 6 ໂມງເຊົ້າ. ທ່ານ ລີບຸນແຈ (Lee Boon Chye) ຮອງລັດຖະມົນຕີກະຊວງສາທາລະນະສຸກຂອງມາເລເຊຍໃນເວລານັ້ນ (2017) ໄດ້ອ້າງເຫດຜົນກ່ຽວເລື່ອງນີ້ວ່າ: “ການຫຼິ້ນເກມທາງອິນເຕີເນັດແບບບໍ່ມີກຳນົດເວລານັ້ນ ຈະເຮັດໃຫ້ເດັກເຍົາວະຊົນເສບຕິດຈົນງອມແງມໄດ້. ການຕິດເກມອອນລາຍ ເຮັດໃຫ້ເດັກໆບໍ່ສົນໃຈບັນຫາອື່ນໆທີ່ມີຄວາມສຳຄັນເຊັ່ນ: ການສຶກສາ ແລະ ອາຊີບການງານ”. ໃນປີ 2017 ທາງການມາເລເຊຍໄດ້ເຮັດການສຳຫຼວດໃນທົ່ວປະເທດກ່ຽວກັບການເຂົ້າເຖິງອິນເຕີເນັດຂອງພົນລະເມືອງ ແລະ ໄດ້ພົບວ່າມີເດັກນ້ອຍອາຍຸລະຫວ່າງ 13-17 ປີ ຕິດອິນເຕີເນັດຈົນເງີຍຫົວບໍ່ຂຶ້ນສູງເຖິງ 34,9% ຈຳນວນຊາວມາເລເຊຍທີ່ນຳໃຊ້ອິນເຕີເນັດໃນເວລານັ້ນ ມີທັງໝົດ 24,1 ລ້ານຄົນ ໃນນັ້ນ 80% ບໍລິໂພກສື່ສັງຄົມອອນລາຍຫຼາຍກວ່າ 4 ຊົ່ວໂມງຕໍ່ວັນ.

ຢູ່ປະເທດອີຣານ ລະຫວ່າງທ້າຍປີ 2018-ຕົ້ນປີ 2019 ກໍມີຂ່າວວ່າກະຊວງສຶກສາຂອງປະເທດນີ້ໄດ້ອອກຂໍ້ຫ້າມນຳໃຊ້ເຄືອຂ່າຍສື່ສັງຄົມຂອງຕ່າງປະເທດຢູ່ຕາມໂຮງຮຽນໃນຂອບເຂດທົ່ວປະເທດ ພ້ອມທັງກຳນົດໃຫ້ນຳໃຊ້ໄດ້ສະເພາະເຄືອຂ່າຍພາຍໃນເທົ່ານັ້ນ. ຂ່າວບໍ່ໄດ້ບອກເຫດຜົນກ່ຽວກັບການອອກຂໍ້ຫ້າມດັ່ງກ່າວ. ໃນຕົ້ນປີ 2018 ໄດ້ເກີດມີເຫດການປະທ້ວງຕາມຫົວເມືອງຕ່າງໆຂອງອີຣານ ເຊິ່ງທາງການຂອງປະເທດນີ້ໄດ້ກ່າວຫາວ່າເຄືອຂ່າຍສື່ສັງຄົມຂອງຕ່າງປະເທດເຊັ່ນ ສື່ເຕເລກຼາມ ແລະ ວັອດແອບໄດ້ມີສ່ວນສົມຮູ້ຮ່ວມຄິດກັບກຳລັງພົ້ນປະຕິວັດອີຣານຢູ່ຕ່າງປະເທດ ເພື່ອກໍ່ຄວາມບໍ່ສະຫງົບຂຶ້ນດ້ວຍການຍຸຍົງໃຫ້ມີການປະທ້ວງ. ໃນປີ 2018 ນີ້ເອງ ທາງການອີຣານໄດ້ສ້າງຕັ້ງເຄືອຂ່າຍສື່ສັງຄົມພາຍໃນເພື່ອຫຼຸດຜ່ອນການອີງອາໄສແຕ່ເຄືອຂ່າຍຂອງຕ່າງປະເທດທີ່ຖືກກ່າວຫາວ່າມີສ່ວນຮັບໃຊ້ອິດທິກຳລັງປໍລະປັກຕໍ່ອີຣານ. ການທີ່ທາງການຂອງອີຣານຫ້າມນຳໃຊ້ເຄືອຂ່າຍສື່ສັງຄົມຢູ່ຕາມໂຮງຮຽນໃນທົ່ວປະເທດນັ້ນ ຄົງເນື່ອງມາຈາກເຫດຜົນທີ່ກ່າວມາຂ້າງເທິງນີ້ລະ. ສະຖິຕິຈາກການສຳຫຼວດໃນທົ່ວປະເທດໃນປີ 2017 ໃຫ້ຮູ້ວ່າຊາວອີຣານນິຍົມນຳໃຊ້ເຄືອຂ່າຍອິນສະຕາແກຣມເປັນອັນດັບທີ 1, ສ່ວນຈຳນວນຜູ້ໃຊ້ແອບ (APP) ນັ້ນມີສູງເຖິງ 40 ລ້ານຄົນຕໍ່ເດືອນ, ເຟດບຸກ ແລະ ທະວິດເຕີ ນັ້ນມີຄົນໃຊ້ຈຳນວນໜ້ອຍ.

ບັດນີ້ ຂໍກ້ຽວມາໃສ່ຂ່າວຈາກກຳປູເຈຍ, ປະເທດບ້ານໃກ້ເຮືອນຄຽງຂອງພວກເຮົາທີ່ໃຫ້ຮູ້ໃນເດືອນກໍລະກົດ ປີ 2022 ວ່າໜັງສືພິມພະນົມເປັນ (The PhanomPenhPose) ໄດ້ພິມບົດຄວາມກ່ຽວກັບລະດັບຄວາມຮູ້,ຄວາມຊຳນານງານໃນການນຳໃຊ້ອິນເຕີເນັດຂອງຄົນໄດ້ກຳປູເຈຍ ແລະ ວ່າ ຄວາມສາມາດໃນການນຳໃຊ້ເຄື່ອງມືໄອທີ (ອິນເຕີເນັດ) ຂອງບຸກຄົນທີ່ເປັນພໍ່ແມ່ ຫຼື ຜູ້ປົກຄອງເດັກນັ້ນ ຍັງຢູ່ໃນລະດັບຈຳກັດທີ່ສຸດ. ເມື່ອຂາດຄວາມຊຳນານໃນການໃຊ້ເຄື່ອງມືໄອທີແລ້ວ ມັນກໍເປັນການຍາກທີ່ຜູ້ເປັນພໍ່ແມ່ຈະຕິດຕາມ, ຄວບຄຸມ ຫຼື ໃຫ້ຄຳແນະນຳແກ່ລູກໆໃນການນຳໃຊ້ສື່ສັງຄົມຢ່າງຖືກຕ້ອງເໝາະສົມ. ໜັງສືພິມໄດ້ສະຫຼຸບວ່າຜູ້ທີ່ນຳໃຊ້ອິນເຕີເນັດເພື່ອເປົ້າໝາຍຕ່າງໆໃນກຳປູເຈຍນັ້ນ ສ່ວນຫຼວງຫຼາຍແມ່ນຄົນໃນໄວເຍົາທີ່ຍັງຂາດບົດຮຽນຊີວິດຕົວຈິງ.




## ຂ້ອຍຈ່າຍໃຫ້

*#ບ່າວກະບື*

**ເມື່ອ**ຄົນເຈັບຕື່ນຂຶ້ນມາ ຫຼັງຈາກການຜ່າຕັດ, ທ່ານໝໍບອກລາວ່າ: " ຂ້ອຍຢ້ານວ່າຊິໄດ້ຜ່າຕັດເຈົ້າຄືນໃໝ່ອີກໄດ້ ເພາະວ່າຂ້ອຍລືມມີດຕັດໄວ້ໃນໂຕເຈົ້າ"

" ເອີ່... ຖ້າວ່າພຽງເພື່ອເອົາມີດຕັດຫັ້ນ, ຂ້ອຍຊີໃຫ້ເຈົ້າໃໝ່ກໍໄດ້ ຂໍແຕ່ຢ່າມາສົນກັບຂ້ອຍອີກ".

## I’D RATHER PAY FOR THEM

*#BAOKBU*

The surgeon told his patient who woke up after having been operated, “I’m afraid we”re going to Have to operate you again. Because, you see, I forgot my scissors inside you”.

“Well, if it’s just because of them, I’d rather pay for them if you just leave me alone”.

ກາຕູນ




ກຳມະກອນຄືຜູ້ສ້າງບ້ານເມືອງໃຫ້ເຮືອງຮຸ່ງ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນຳ :
ທ່ານ ສົງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ :
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

ຄະນະບັນນາທິການ :
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

ກອງບັນນາທິການ :
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ທອມສະນິດ
ນາງ ປາກາລັກ ພົມມີໄຊ

ອອກແບບ - ຈັດໜ້າ :
ທ່ານ ຄຳຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ນາງ ນິດຕາ ຄຸນປາກດີ